ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ມັງກອນ 2025
ປີທີ 14
ສະບັບທີ 1001
ລາຍສັບປະດາ


## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນທັນວາ 2024



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນທັນວາ 2024 ໄດ້ດຳເນີນໃນວັນທີ 30-31 ທັນວາຜ່ານມາ ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດແລະກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່

ອ່ານຕໍ່ໜ້າ 5

## ກອດກາເນື້ອໃນຮອບດ້ານຮ່າງລັດຖະທຳມະນູນ




(ສພຊ) - ວັນທີ 27 ທັນວາ 2024 ທີ່ເມືອງວຽງຄຳແຂວງວຽງຈັນ, ຄະນະກຳ ມະການລະດັບຊາດປັບປຸງລັດຖະທຳມະນູນສະບັບປີ 2015 (ຄລຊ) ໄດ້ຈັດກອງປະຊຸມຄົ້ນຄວ້າປັບປຸງເນື້ອໃນລັດຖະທຳມະນູນ ໂດຍການເປັນປະທານຂອງທ່ານປອ. ກອງແກ້ວ ໄຊສິງຄາມ ກຳມະການສູນກາງພັກ, ປະທານສະຖາບັນວິທະຍາສາດເສດຖະກິດ ແລະ

ອ່ານຕໍ່ໜ້າ 5

## ຮຽບຮຽງເນື້ອໃນ 2 ຮ່າງກົດໝາຍ



(ສພຊ) - ວັນທີ 6-7 ມັງກອນນີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຮຽບຮຽງເນື້ອໃນສອງຮ່າງກົດໝາຍຄື: ກົດໝາຍວ່າດ້ວຍທີ່ຢູ່ອາໄສ (ສ້າງໃໝ່) ແລະ ກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ (ປັບປຸງ) ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາຮອງປະທານສະພາແຫ່ງຊາດ ເຊິ່ງມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງສພຊ, ຮອງລັດຖະມົນຕີກະຊວງໂຍທາທິການແລະຂົນສົ່ງ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ ພ້ອມດ້ວຍຄະນະກົມ, ຄະນະພະແນກແລະພະນັກງານຈາກສພຊ ແລະ ພາກສ່ວນທີ່ກ່ຽວຂ້ອງ;

ອ່ານຕໍ່ໜ້າ 5

## ທາລື ແລະ ປະກອບຄຳເຫັນໃສ່ຮ່າງມະຕິ ການປະຕິບັດນະໂຍບາຍພາຍໃນ ສພຊ



(ສພຊ) - ກອງປະຊຸມປຶກສາຫາລື ແລະ ປະກອບຄຳເຫັນໃສ່ຮ່າງມະຕິວ່າດ້ວຍການປະຕິບັດນະໂຍບາຍໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ (ສພຊ) ໄດ້ຈັດຂຶ້ນໃນວັນທີ 28-29 ທັນວາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ; ມີທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ບັນດາຄະນະກົມ, ຄະນະພະແນກ ແລະ ລັດຖະກອນວິຊາການ ຈາກພາກສ່ວນທີ່ກ່ຽວຂ້ອງຂອງ ສພຊ ເຂົ້າຮ່ວມ 30 ກວ່າທ່ານ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ມີຄຳເຫັນວ່າ: ການປຶກສາຫາລື ແລະ ປະກອບຄຳເຫັນໃສ່ຮ່າງມະຕິວ່າດ້ວຍການປະຕິບັດນະໂຍບາຍໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດເປັນວຽກງານທີ່ມີຄວາມສຳຄັນ, ລະອຽດອ່ອນ

ອ່ານຕໍ່ໜ້າ 5

## ຄະນະຜູ້ແທນສະພາແຫ່ງຊາດ ສປປລາວ ສຳເລັດການທັດສະນະສຶກສາທີ່ ສສ.ເຢຍລະມັນ



(ສພຊ) - ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຄູ່ຮ່ວມແບບກວມລວມ ທີ່ມີມາແຕ່ດົນນານ ລະຫວ່າງ ສປປລາວ ແລະ ສະຫະພັນສາທາລະນະລັດເຢຍລະມັນ ກໍຄືການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດໃຫ້ນັບມື້ນັບໄດ້ຮັບການພັດທະນາຫຼາຍຂຶ້ນ ທັງເປັນການປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດພາລະບົດບາດການຕິດຕາມກວດກາ, ການເປັນຕົວແທນ, ການສົ່ງເສີມແລະສ້າງຄວາມເຂັ້ມແຂງທາງດ້ານນິຕິບັນຍັດ; ໃນລະຫວ່າງວັນທີ 14-22 ທັນວາ 2024 ຄະນະຜູ້ ແທນສະພາແຫ່ງຊາດ ແຫ່ງ ສປປລາວ ນຳໂດຍທ່ານ ສົມຍາ ປຣະເສີດ ປະທານກຳມາທິການ

ອ່ານຕໍ່ໜ້າ 4

## ຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນ ປະຫວັດສາດ ຂອງສະພາແຫ່ງຊາດ



ອ່ານຕໍ່ໜ້າ 5





ຖືເປັນກຽດ... (ໜ້າ 8)

ປະຊາກອນໂລກບັນລຸ... (ໜ້າ 10)




ປະທານາທິບໍດີ ... (ໜ້າ 11)




ເລື່ອງທີ່ໜ້າເສັບໃຈ... (ໜ້າ 12)

# ສ້າງຄວາມຊຳນານການຜະລິດລາຍການໂທລະພາບ



(ສພຊ) - ກອງປະຊຸມເຝິກອົບຮົມວຽກງານສື່ມວນຊົນ ພາຍໃຕ້ຫົວຂໍ້“ສ້າງຄວາມຊຳນານງານໃນການຜະລິດລາຍການໂທລະພາບ ໃຫ້ແກ່ລັດຖະກອນຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ” ໂດຍການເປັນປະທານກ່າວເປີດຂອງທ່ານນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ເຊິ່ງມີທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານສື່ມວນຊົນພ້ອມດ້ວຍວິທະຍາກອນທີ່ເປັນພະນັກງານແລະອະດີດພະນັກງານຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ນັກເຝິກອົບຮົມທີ່ເປັນພະນັກງານຜູ້ຮັບຜິດຊອບວຽກງານສື່ມວນຊົນຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ), ຕາງໜ້າຈາກວິທະຍຸກະຈາຍສຽງແຫ່ງຊາດລາວ, ໂທລະພາບແຫ່ງຊາດລາວ, ໂທລະພາບກອງທັບປະຊາຊົນລາວ, ໂທລະພາບປ້ອງກັນຄວາມສະຫງົບ, ໜັງສືພິມປະຊາຊົນ, ໜັງສືພິມປະເທດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກວ່າ 60 ທ່ານ.

ທັງນີ້, ກໍເພື່ອຍົກລະດັບບຸກຄະລາກອນທີ່ຮັບຜິດຊອບວຽກງານສື່ມວນຊົນຂອງ ສພຊ ແລະສພຂ ໃຫ້ມີຄວາມຮູ້, ຄວາມເຂົ້າໃຈຢ່າງຖືກຕ້ອງ ກ່ຽວກັບການໂຄສະນາເຜີຍແຜ່ພາລະບົດບາດ, ການເຄື່ອນໄຫວວຽກງານທາງລັດຖະການທັງພາຍໃນແລະຕ່າງປະເທດ, ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຜົນສຳເລັດກອງປະຊຸມຕ່າງໆ ໂດຍຜ່ານສື່ສິ່ງພິມ, ສື່ເອເລັກໂຕຣນິກຂອງສະພາແຫ່ງຊາດ ໃຫ້ມີເນື້ອໃນເລິກເຊິ່ງ, ຫຼາກຫຼາຍສີສັນທີ່ສອດຄ່ອງກັບແນວທາງນະໂຍບາຍຂອງພັກແລະກົດໝາຍທັງເປັນການປັບປຸງເຄືອຂ່າຍການສະໜອງຂໍ້ມູນຂ່າວສານໃຫ້ກັນແລະກັນ ຢ່າງປົກກະຕິ ແລະ ສະໝ່ຳສະເໝີ.

ກອງປະຊຸມໄດ້ແລກປ່ຽນບົດຮຽນການເປັນໂຄສົກປະກາດຂ່າວ ແລະ ການເປັນພິທີກອນລາຍການທາງໂທລະພາບ; ການຂຽນບົດ, ການສ້າງສະກຣິບລາຍການໂທລະພາບ ແລະ ຂ່າວ; ການຕັດຕໍ່ພາບ ແລະ ວິດີໂອແບບມືອາຊີບ. ຈາກນັ້ນ, ກໍມີການແບ່ງກຸ່ມເພື່ອປະຕິບັດຕົວຈິງໃນການສ້າງຄອນເທັນ, ຂຽນສະກຣິບ, ການຖ່າຍທຳ ແລະ ການຕັດຕໍ່ແບບມືອາຊີບ.

ການເຝິກອົບຮົມທີ່ຈັດຢູ່ເມືອງວັງວຽງ ແຂວງວຽງຈັນ ໃນວັນທີ 4-7 ມັງກອນນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

# ກວດກາເນື້ອໃນແຜ່ນພັບ ແລະ ຄູ່ມືເລືອກຕັ້ງ



(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານແຜ່ນພັບຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ແລະ ຄູ່ມືເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນວັນທີ 25-26 ທັນວາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ), ເຂົ້າຮ່ວມມີບັນດາທ່ານຮອງປະທານ ກວສຊ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານຈຳນວນໜຶ່ງພາຍໃນ ສພຊ.

ທ່ານ ສຸບັນ ສະວະບຸດ ກ່າວວ່າ: ຈຸດປະສົງຂອງກອງປະຊຸມແມ່ນເພື່ອຄວາມເປັນເອກະພາບໃນການກວດກາເນື້ອໃນຮອບດ້ານກ່ຽວກັບການສ້າງແຜ່ນພັບສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ຄູ່ມືການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ບັນລຸຜົນສຳເລັດຕາມແຜນການ; ເປັນການສືບຕໍ່ຄົ້ນຄວ້າສ້າງແຜ່ນພັບ ແລະ ປັບປຸງເນື້ອໃນໃຫ້ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງ ແລະ ກົດໝາຍທີ່ກຳນົດ; ສ້າງປຶ້ມຄູ່ມືການເລືອກຕັ້ງ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຮູ້, ເຂົ້າໃຈຕໍ່ກັບຂັ້ນຕອນ ແລະ ບາດກ້າວການກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຢ່າງຖືກຕ້ອງ.

ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຟັງບົດສະເໜີກ່ຽວກັບເນື້ອໃນແຜ່ນພັບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ຄູ່ມືການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ກໍສົນທະນາແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນ ເພື່ອເຮັດໃຫ້ເນື້ອໃນມີຄວາມຊັດເຈນ ແລະ ຈະນຳໄປປັບປຸງໃຫ້ສຳເລັດຕາມແຜນການທີ່ວາງໄວ້.

ຄາດຄະເນຜົນໄດ້ຮັບພາຍຫຼັງແຜ່ນພັບ ແລະ ຄູ່ມືດັ່ງກ່າວຖືກຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຈະເຮັດໃຫ້ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຮັບການເຜີຍແຜ່ອອກສູ່ສັງຄົມຢ່າງກວ້າງຂວາງ ເປັນຕົ້ນ: 1) ເຮັດໃຫ້ຖັນແຖວສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້, ເຊື່ອມຊຶມ ແລະ ເຂົ້າໃຈກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຊ, ສພຂ; 2) ເປັນຄູ່ມືໃຫ້ບັນດາອົງການປົກຄອງແຕ່ລະຂັ້ນໃນການກະກຽມ ແລະ ຮັບໃຊ້ການເລືອກຕັ້ງສະມາຊິກສະພາ ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ.

ວັນທີ 27 ທັນວາ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສືບຕໍ່ຈັດກອງປະຊຸມເຝິກອົບຮົມວຽກງານເສນາທິການໃຫ້ແກ່ພະນັກງານ-ລັດຖະກອນຂອງຕົນເຊິ່ງໄດ້ຮັບຟັງການຕີລາຄາການປະຕິບັດພາລະບົດບາດ ໃນ 4 ພະແນກຂອງ ກວສຊ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**

# ກສຕສ ຕິດຕາມກວດກາຢູ່ແຂວງຫົວພັນ



(ສພຊ) - ວັນທີ 23-26 ທັນວາ 2024 ທ່ານ ມະນີໂສ ຊານຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ ກ່ຽວກັບວຽກງານຂຶ້ນທະບຽນອອກໃບຕາດິນ, ການເຊົ່າ ແລະ ສຳປະທານທີ່ດິນ, ວຽກງານນະໂຍບາຍການອະນຸຮັກແລະການຫຼຸດຜ່ອນຜົນກະທົບຕໍ່ຊີວະນາໆພັນ ລວມທັງວຽກງານການຟື້ນຟູປ່າ ແລະ ປູກໄມ້ທົດແທນ ຢູ່ແຂວງຫົວພັນ.

ທ່ານ ມະນີໂສ ຊານຸນຕີ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານຮອງເຈົ້າແຂວງຫົວພັນ ເພື່ອລາຍງານຈຸດປະສົງຂອງການເຄື່ອນໄຫວວຽກງານຢູ່ແຂວງໃນຄັ້ງນີ້; ພ້ອມກັນນັ້ນ, ກໍໄດ້ຈັດກອງປະຊຸມເຮັດວຽກຮ່ວມກັບສະພາປະຊາຊົນແຂວງແລະພະແນກການທີ່ກ່ຽວຂ້ອງຂອງແຂວງເປັນຕົ້ນ ພະແນກການເງິນ, ແຜນການ ແລະການລົງທຶນ, ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນອອກໃບຕາດິນ, ສະພາບການຄຸ້ມຄອງການເຊົ່າ ແລະ ສຳປະທານທີ່ດິນ, ວຽກງານນະໂຍບາຍການອະນຸຮັກ ແລະ ການຫຼຸດຜ່ອນຜົນກະທົບຕໍ່ຊີວະນາໆພັນ ລວມທັງວຽກງານການຟື້ນຟູປ່າ ແລະ ປູກໄມ້ທົດແທນ ຢູ່ພາຍໃນແຂວງຫົວພັນ ບົນພື້ນຖານການແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍແລະດ້ານອ່ອນຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.

ທ່ານ ມະນີໂສ ຊານຸນຕີ ໃນນາມປະທານກອງປະຊຸມ ໄດ້ມີຄຳເຫັນຊີ້ນຳໃຫ້ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສະເພາະແມ່ນການອອກໃບຕາດິນພາຍໃນແຂວງ ເພື່ອໃຫ້ສາມາດບັນລຸຕາມຄາດໝາຍທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີຂອງແຂວງ ກໍຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ5ປີຄັ້ງທີIXພ້ອມດຽວກັນນັ້ນ, ຍັງເນັ້ນໜັກໃຫ້ທຸກຂະແໜງການກ່ຽວຂ້ອງ ມີສ່ວນຮ່ວມ ແລະ ເປັນເຈົ້າການໃນການຄຸ້ມຄອງ ແລະ ຕິດຕາມກວດກາການນຳໃຊ້ທີ່ດິນແຕ່ລະປະເພດ ໂດຍສະເພາະແມ່ນທີ່ດິນທີ່ຕິດພັນກັບການເຊົ່າ ແລະ ສຳປະທານ ໃຫ້ມີການຕິດຕາມກວດກາຢ່າງປົກກະຕິ ເພື່ອຮັບປະກັນໃຫ້ແກ່ການນຳໃຊ້ທີ່ດິນ ສອດຄ່ອງໄປຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທັງຮັບປະກັນໄດ້ການນຳໃຊ້ຊັບພະຍາກອນທີ່ມີຢູ່ໃຫ້ເກີດປະໂຫຍດສູງສຸດ ນຳເອົາຜົນປະໂຫຍດມາສູ່ທ້ອງຖິ່ນ, ສັງຄົມ ແລະ ປະເທດຊາດ ໄດ້ເຕັມເມັດເຕັມໜ່ວຍ.

ຈາກນັ້ນ, ຄະນະຍັງໄດ້ເດີນທາງໄປຢ້ຽມຊົມເຂດພື້ນທີ່ຕົວຈິງຂອງບັນດາໂຄງການພັດທະນາແຮ່ທາດຈຳນວນໜຶ່ງ ທີ່ຕິດພັນກັບການເຊົ່າແລະສຳປະທານທີ່ດິນພາຍໃນແຂວງ.



# ບາງຄຳເຫັນຂອງ ສສຊ ຕໍ່ບົດລາຍງານຂອງລັດຖະບານ

(ສພຊ)-ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເມື່ອ



ວັນທີ 20 ພະຈິກຜ່ານມາ, **ທ່ານ ບຸນຕາ ເທບພະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ** ໄດ້ປະກອບຄຳເຫັນເພີ່ມຕື່ມຕໍ່ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແລະແຜນເງິນຕາ ຢູ່ພາກທິດທາງແຜນການປີ 2025 ດັ່ງນີ້:

1. ຄາດໝາຍສູ້ຊົນດ້ານກະສິກຳ ເຫັນວ່າມີຄວາມສ່ຽງທີ່ບໍ່ຍືນຍົງ ເພາະລັດຖະບານຍັງບໍ່ໄດ້ກຳນົດແຜນຜັງຕົວເມືອງ, ແຜນຜັງເສັ້ນທາງໃຫ້ແຕ່ລະແຂວງ, ເມືອງ, ບ້ານໃນທົ່ວປະເທດຢ່າງຈະແຈ້ງ ເນື່ອງຈາກວ່າຈະເປັນບັນຫາໜຶ່ງກະທົບໃສ່ວຽກງານກະສິກຳ ໂດຍສະເພາະຂົງເຂດກະສິກຳທີ່ມີຍຸດທະສາດດ້ານການຄຸ້ມຄອງດິນກະສິກຳ ແຕ່ພັດບໍ່ໄດ້ກຳນົດຢ່າງຈະແຈ້ງວ່າ ດິນກະສິກຳທີ່ລັດຄຸ້ມຄອງມີຈັກເຮັກຕາ, ເອກະຊົນມີຈັກເຮັກຕາ; ສະເໜີໃຫ້ກຳນົດຜັງເມືອງ ຫຼື ຜັງເສັ້ນທາງ ແລະ ຜັງກະສິກຳ, ດິນກະສິກຳຂອງລັດ ຂອງເອກະຊົນທີ່ຄຸ້ມຄອງໃຫ້ຈະແຈ້ງ ເພື່ອຄວາມຍືນຍົງ.

2. ຄາດໝາຍດ້ານການເງິນ, ຢູ່ໃນແຜນຈະສູ້ຊົນເກັບລາຍຮັບໃຫ້ໄດ້ທັງໝົດ 69 ຕື້ກີບ ແຕ່ໃນນັ້ນມີແຜນປະຕິບັດນະໂຍບາຍປະຢັດຕ້ານການຟຸມເຟືອຍ ເພື່ອຮັກສາເພດານລາຍຈ່າຍ ໃນນີ້ແມ່ນຕິດພັນກັບວຽກງານສຶກສາທີ່ສ້າງລາຍຈ່າຍຟຸມເຟືອຍຍ້ອນການສຸມງົບປະມານສ້າງຊັບພະຍາກອນມະນຸດທາງດ້ານການສຶກສາບໍ່ແທດເໝາະກັບຕະຫຼາດແຮງງານຕົວຈິງ. ຍົກຕົວຢ່າງ: ເຮົາສຸມເງິນໃສ່ໂຮງຮຽນຄົງຄຳຊ້າງ, ໂຮງຮຽນກົດໝາຍ, ໂຮງຮຽນທະນາຄານ, ໂຮງຮຽນແພດສາດ ແຕ່ຂຶ້ນນຳກະຊວງໃຜກະຊວງລາວ ກໍໃຊ້ງົບປະມານມະຫາສານ, ບຸຄະລາກອນມະຫາສານ ແຕ່ບໍ່ໄດ້ລວມສູນ; ຜະລິດນັກການເງິນ, ການທະນາຄານອອກມາ ແຕ່ວ່າຮັບເຂົ້າເຮັດວຽກຈຳກັດ ສຸດທ້າຍມະຫາວິທະຍາໄລກໍ່ສ້າງຄືກັນ, ຜະລິດອອກມາບໍ່ໄດ້ເຮັດວຽກ ຖືວ່າບໍ່ຖືກຕາມຕະຫຼາດແຮງງານ; ຫາກເຮົາຫັນໂຕນີ້ໄປເປັນເນື້ອທີ່ພື້ນຖານໂຄງລ່າງ ໄປເປັນເສດຖະກິດອື່ນ ອາດຈະດີ ຫຼືວ່າສ້າງເປັນສູນວິຊາຊີບໂຮງຮຽນກິນນອນກໍດີ, ຫັນຫຼັກສູດເຂົ້າມາລວມສູນລະບົບຂອງກະຊວງສຶກສາທິການ ແລະ ກິລາ ຢູ່ມະຫາວິທະຍາໄລແຫ່ງຊາດກໍໄດ້, ຍັງຫວ່າງຫຼາຍ.

3. ການສ້າງລາຍຮັບ, ລັດຖະບານຕ້ອງກະຕຸ້ນ ແລະ ສົ່ງເສີມພື້ນຖານໂຄງລ່າງແຫຼ່ງລາຍຮັບໃຫ້ຫຼາຍ ເພື່ອໃຫ້ສັງຄົມ, ຄົນມີເງິນ ອອກມາໃຊ້ຈ່າຍກະຕຸ້ນເສດຖະກິດຢ່າງກວ້າງຂວາງ; ໃຫ້ປະຊາຊົນໄດ້ຊື້, ໄດ້ຂາຍ ໂດຍສະເພາະຕ້ອງສຸມໃສ່ສ້າງເສັ້ນທາງເບຕົງທີ່ໄດ້ມາດຕະຖານຢູ່ໃນຕົວເມືອງໃຫ້ສຳເລັດ. ຕົວຢ່າງ: ກະຕຸ້ນເສດຖະກິດເມືອງວັງວຽງ, ວິວທິວທັດທຳມະຊາດເປັນແຫຼ່ງລາຍຮັບສຳຄັນ ແຕ່ຖະໜົນຫົນທາງ, ຮ່ອມ ຍັງເປັນຂຸມເປັນບໍ່ສັນຈອນໄປມາບໍ່ສະດວກ, ນັກທ່ອງທ່ຽວທົ່ວໂລກໄປທ່ຽວເຂົາກໍຈົ່ມແຕ່ເລື່ອງຫົນທາງ, ກິນອາຫານກໍບໍ່ແຊບ ມີຂີ້ຝຸ່ນ. ບັນຫານີ້ຕ້ອງໄດ້ເບິ່ງວ່າຄວນຈະກຳນົດ, ຕັດສິນໃຈເອົາເງິນເກີນແຜນຂອງແຕ່ລະແຂວງ ອະນຸມັດໃຫ້ເຂົາເຈົ້າເຮັດເສັ້ນທາງໃຫ້ມັນດີ, ຖ້າເສັ້ນທາງດີ ປະຊາຊົນກໍຈະໄດ້ຜະລິດ, ນັ່ງຂາຍເຄື່ອງຜະລິດຕະພັນຕາມຮ່ອມທາງ ຄົນຍ່າງໄປທ່ຽວເຫັນເຂົາກໍຊື້.

4. ວຽກຈຸດສຸມດ້ານການເງິນ: ມາດຕະຖານອື່ນໆທີ່ກຳນົດອອກມາແມ່ນດີທີ່ໄດ້ກຳນົດວ່າຈະແກ້ໄຂ, ແຕ່ຍັງມີບັນຫາທີ່ວ່າໄດ້ປ່ອຍໃຫ້ພາກເອກະຊົນເຂົ້າໄປຮູ້ເຖິງນະໂຍບາຍຄວາມລັບພາຍໃນລະບົບການເງິນແລະຄັງສຳຮອງຂອງຊາດ; ທົ່ວໂລກເຂົາຮັກສາເປັນຄວາມລັບ ຖ້າປ່ອຍໃຫ້ເຂົາເຈົ້າເຂົ້າໄປຮັບຮູ້ກໍຄືເຮົາເຫັນໃນປັດຈຸບັນ ກະຕຸ້ນແນວໃດເຮັດໃຫ້ເສດຖະກິດເງິນຂຶ້ນເງິນລົງ, ສະພາບປັ່ນປ່ວນແນວໃດແມ່ນເຂົາເຈົ້າເຮັດໄດ້; ສິ່ງໃດທີ່ເປັນຄວາມລັບຂອງພາຍໃນ ເຮົາຕ້ອງຮັກສາໃຫ້ໄດ້.

5. ຂໍ້ສະເໜີຂອງປະຊາຊົນ (ສ່ວນຫຼາຍແມ່ນເພດຍິງ) ຢາກໃຫ້ລັດຖະບານຄົ້ນຄວ້ານະໂຍບາຍແລະສ້າງຕັ້ງສະຫະກອນລວມໝູ່ຂຶ້ນມາໃໝ່, ລະບອບສັງຄົມນິຍົມຄວນມີສະຫະກອນ, ປະເທດເພື່ອນບ້ານທີ່ເປັນລະບອບທຶນນິຍົມ ກໍຍັງມີສະຫະກອນ ເພາະວ່າດຽວນີ້ແມ່ບ້ານຫຼືຜູ້ຫວ່າງງານຢູ່ເຮືອນເຝົ້າເຮືອນບໍ່ມີວຽກເຮັດ; ຖ້າເຮົາຫັນໄປສູ່ການລວມໝູ່ເຮັດຫັດຖະກຳ, ກະສິກຳ, ຕຳຫູກທໍໄໝ ຫຼື ອື່ນໆຢູ່ນຳບ້ານ ເຂົາເຈົ້ານັ່ງເຝົ້າເຮືອນທັງເຮັດວຽກໄປພ້ອມ.

6. ຢາກໃຫ້ສົ່ງເສີມດ້ານຊ່ຽວຊານວິຊາການ, ສົ່ງເສີມທຽບເທົ່າກັບຕຳແໜ່ງບໍລິຫານລັດຂອງແພດໝໍ; ເປັນສາດສະດາຈານ ຕ້ອງມີເງິນທຽບເທົ່າ, ຖ້າຈະໃຫ້ເຂົາເຈົ້າສຸມໃສ່ດ້ານການຄົ້ນຄວ້າເປັນນັກວິທະຍາສາດອື່ນໆ ແຕ່ມາທຽບຕຳແໜ່ງກັບຜູ້ບໍລິຫານ ແມ່ນມີນະໂຍບາຍແຕກຕ່າງກັນ.



**ທ່ານ ຄຳພອງ ແສງສະຫວ່າງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ເມື່ອວັນທີ 20 ພະຈິກຜ່ານມາ ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX:

1. ວຽກງານສຶກສາ: ສະເໜີໃຫ້ພິຈາລະນາການເພີ່ມເງິນອຸດໜູນອາຫານກາງເວັນໃຫ້ແກ່ນັກຮຽນ 560 ກວ່າໂຮງຮຽນທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ, ລັດຖະບານເພີ່ມເງິນໃຫ້ພຽງແຕ່ 1,000 ກີບສະເໜີວ່າຄວນຂຶ້ນຕື່ມເປັນ 5,000 ກີບຕໍ່ຄາບ ເພາະເພີ່ມເງິນອາຫານກາງເວັນໃຫ້ນັກຮຽນປະຖົມ ຈະເປັນວິທີໜຶ່ງທີ່ແກ້ໄຂການປະລະຂອງນັກຮຽນ ແລະ ຈະເຮັດໃຫ້ຄູກັບນັກຮຽນມີຄວາມຜູກພັນກັນດີຂຶ້ນ, ຖ້າສົມທຽບໃສ່ອັດຕານັກໂທດຕ້ອງຫາ ຜູ້ໜຶ່ງ 9,500 ກີບ ແມ່ນຫຼຸດໂຕນກັນຫຼາຍ; ເຮົາລົງທຶນໃສ່ການສຶກສາເດັກນ້ອຍໃນມື້ນີ້ ຈະເປັນຜູ້ໃຫຍ່ໃນມື້ໜ້າ ຈະເປັນການລົງທຶນໃຫ້ແກ່ການສ້າງຊັບພະຍາກອນມະນຸດທີ່ມີຄຸນນະພາບສູງທີ່ສຸດ.

2. ຊ່ວຍພິຈາລະນາກ່ຽວກັບລັດຖະບັນຍັດຂອງນະຄອນຫຼວງວຽງຈັນ ມີ 2 ສະບັບ: 1. ເວົ້າເລື່ອງສ້າງນະຄອນຫຼວງ ແລະ 2. ເງິນບໍລິການ; ຖ້າວ່າລັດຖະບານແກ້ໄຂ ເງິນທ້ອງຖິ່ນທີ່ນະຄອນຫຼວງເກັບໄດ້ ໃຫ້ 18% ເສັ້ນທາງພື້ນຖານໂຄງລ່າງ, ໜີ້ສາທາລະນະ ຈະບໍ່ເປັນແບບນີ້.

**ທ່ານ ຄຳຈັນ ໂສຕາປະເສີດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ** ໄດ້ມີຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ເຊິ່ງມີບາງຄຳສະເໜີຄື:

1. ແຂວງອຸດົມໄຊມີການກູ້ຢືມເງິນຈາກທະນາຄານມາປະຕິບັດໂຄງການກໍ່ສ້າງຕາຂ່າຍໄຟຟ້າເຂົ້າເຂດພັດທະນາ ແລະ ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນເວລາດົນນານ ມູນຄ່າ 39 ຕື້ກີບ, ແຂວງໄດ້ມີໜັງສືເຖິງກະຊວງແຜນການ ແລະ ການລົງທຶນ, ທາງສະພາປະຊາຊົນແຂວງ ກໍຄືຢູ່ໃນສະພາແຫ່ງຊາດ ໄດ້ຕັ້ງບັນຫານີ້ຂຶ້ນ, ແຕ່ມາຮອດປັດຈຸບັນພາກສ່ວນກ່ຽວຂ້ອງຄືລັດຖະບານຍັງບໍ່ໄດ້ພິຈາລະນາແລະບໍ່ມີຄຳຕອບໃຫ້ແຂວງເທົ່າທີ່ຄວນ.

2. ລັດຖະບານກຳລັງກວດກາບັນດາໂຄງການສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ແລະ ໂຄງການອື່ນໆທີ່ຜູ້ປະກອບການໄດ້ເຊັນ MOU ກັບລັດຖະບານ ຫຼືວ່າຂະແໜງການທ້ອງຖິ່ນ ແຕ່ວ່າບໍ່ຈັດຕັ້ງປະຕິບັດ; ສະເໜີໃຫ້ກວດກາຄືນທັງໝົດບັນດາ MOU ທັງຫຼາຍ, ອັນໃດທີ່ບໍ່ຈັດຕັ້ງປະຕິບັດ ແລະ ອັນໃດທີ່ຊຸກຍູ້ໃຫ້ເຂົາເຈົ້າຮີບຮ້ອນຈັດຕັ້ງປະຕິບັດ, ອັນນີ້ກໍເປັນສິ່ງກີດຂວາງກີດໜ່ວງການພັດທະນາວຽກງານຕ່າງໆຢູ່ໃນຊາດຂອງພວກເຮົາ.

3. ການປັບປຸງລັດວິສາຫະກິດ ຫຼື ວິສາຫະກິດຂອງລັດໃນຈຳນວນປະມານ 770 ກວ່າຫົວໜ່ວຍ, ວິສາຫະກິດຂອງລັດຈຳນວນໜຶ່ງແມ່ນຖືກຍຸບ ແລະ ກໍມີຫຼາຍຫົວ ໜ່ວຍພໍສົມຄວນມີຜົນສຳເລັດສູງ ເຊິ່ງເປັນໜ້າຍ້ອງຍໍຊົມເຊີຍ; ແຕ່ມີຫົວໜ່ວຍວິສາຫະກິດຂອງລັດທີ່ມີການປັບປຸງ, ປັບປຸງແລ້ວປັບປຸງອີກ ແຕ່ສະພາບບໍ່ດີຂຶ້ນ ໝາຍຄວາວ່າຍັງມີທ່າອຽງຈະຫຼຸບທຶນອີກຕໍ່



ໄປໃນຕໍ່ໜ້າ, ຂໍໃຫ້ມີທິດທາງແກ້ໄຂໂດຍໄວເພື່ອໃຫ້ວິສາຫະກິດຂອງລັດກາຍເປັນເສດຖະກິດປາຍແຫຼມນຳໜ້າທຸລະກິດຂອງຊາດ.

4. ເລື່ອງໂຄງປະກອບລາຄາໄຟຟ້າ, ຂໍຕັ້ງຄຳຖາມຕໍ່ການກຳນົດໂຄງປະກອບລາຄາໄຟຟ້າອັດຕາທະວີຄູນ, ຄືພວກເຮົາຮັບຊາບນຳກັນແລ້ວວ່າ ການຊື້-ຂາຍສິນຄ້າປະເພດຕ່າງໆຕາມກົນໄກເສດຖະກິດຕະຫຼາດ ຊື້ຫຼາຍລາຄາຫຼຸດລົງ, ແຕ່ໄຟຟ້າລາວ ຊື້ຫຼາຍ ແລະ ມີອັດຕາທະວີຄູນ ຄູນຂຶ້ນແພງຂຶ້ນ; ໄດ້ຍິນຂ່າວວ່ານັກລົງທຶນມາຫຼາຍພໍສົມຄວນ, ຢາກຕັ້ງໂຮງຈັກໂຮງງານ ແຕ່ໄດ້ຍິນເລື່ອງໂຄງປະກອບລາຄາໄຟຟ້າ ເຂົາກໍຖອຍໄປເພາະວ່າບໍ່ສາມາດເຮັດໄດ້ ຫຼື ຜູ້ທີ່ເຮັດແລ້ວ ສິນຄ້າບໍ່ສາມາດຂາຍໄດ້ຍ້ອນບວກລາຄາໄຟຟ້າ ສິນຄ້າແພງຂາຍບໍ່ໄດ້, ຈັ່ງຊັ້ນກໍຍຸບ; ຂົງເຂດອຸດສາຫະກຳປະກອບໃນໂຄງສ້າງຂອງເສດຖະກິດແຫ່ງຊາດ ມີແຕ່ 9% ບໍ່ຮອດ 10%. ສະຫຼຸບລວມແລ້ວ ຂົງເຂດອຸດສາຫະກຳຂອງພວກເຮົາບໍ່ມີການຂະຫຍາຍຕົວເທົ່າທີ່ຄວນ,



ສະເໜີໃຫ້ກວດກາຄືນໂຄງປະກອບລາຄາໄຟຟ້າ ຈະກຳນົດນະໂຍບາຍໃຫ້ປະຊາຊົນພົນລະເມືອງທີ່ຢູ່ໃນຄອບຄົວທຸກຍາກເທົ່າໃດແທ້ ແລະ ເຫຼືອນັ້ນຂໍໃຫ້ເປັນລາຄາອັນດຽວກັນ, ຈ່າຍຕາມບໍລິມາດໄຟຟ້າທີ່ກົງເຕີວັດແທກ.

**ທ່ານ ເພັງນີລັນ ຄຳພັນເພັງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ** ໄດ້ປະກອບຄຳຄິດຄຳເຫັນ ໂດຍລົງເລິກຂົງເຂດວຽກງານການເງິນແລະມາດຕະການຈັດຕັ້ງປະຕິບັດໂຄງການຈຳນວນໜຶ່ງ ດັ່ງນີ້:

1. ສະເໜີລັດຖະບານສືບຕໍ່ຈັດຕັ້ງການແບ່ງຂັ້ນຄຸ້ມຄອງລາຍຮັບຂອງສູນກາງ ແລະ ທ້ອງຖິ່ນເປັນຕົ້ນຢູ່ດ່ານ, ໃຫ້ທ້ອງຖິ່ນໄດ້ສືບຕໍ່ຄຸ້ມຄອງການພັດທະນາດ້ານນີ້ຕື່ມ, ເນື່ອງຈາກວ່າທີ່ຜ່ານມາກໍໄດ້ບົບແບ່ງແລ້ວກ່ອນໜ້ານີ້ 10 ປີ ແບ່ງ 10% ໃຫ້ແຕ່ລະແຂວງທີ່ມີດ່ານສາກົນ ເພື່ອນຳໃຊ້ເງິນດັ່ງກ່າວເຂົ້າໃນການຄຸ້ມຄອງບໍລິຫານດ່ານ ແລະ ພັດທະນາໂຄງລ່າງດ້ານຕ່າງໆເປັນຕົ້ນ: ເສັ້ນທາງ, ອາຄານສະຖານທີ່ຢູ່ພາຍໃນດ່ານນັ້ນໆ ເພື່ອໃຫ້ດ່ານໄດ້ຮັບການບໍລິການນັບມື້ນັບດີຂຶ້ນ ເຊິ່ງເປັນໃບໜ້າຂອງປະເທດຊາດ; ຜ່ານມາກໍໄດ້ຈັດແບ່ງຈຳນວນໜຶ່ງໃຫ້ແຕ່ລະດ່ານ ກໍຖືວ່າບໍລິຫານດ່ານຈຳກັດ, ດ່ານໜຶ່ງປະມານ 2-3 ຮ້ອຍລ້ານ ໃຊ້ໜີ້ເກົ່າກໍບໍ່ພໍ, ບໍ່ທັນເວົ້າເຖິງວ່າຈະພັດທະນາໂຄງລ່າງດ້ານອື່ນໆ.

2. ຕໍ່ກັບການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດໂຄງການ ໂດຍສະເພາະແມ່ນເສັ້ນທາງ ແລະ ກັນເຈື່ອນຢູ່ຕາມບໍລິເວນຊາຍແດນນັ້ນ, ສະເໜີລັດຖະບານກໍຄືຂັ້ນເທິງ ຈັດຕັ້ງຄະນະກຳມະການລະດັບຊາດ ລົງໄປຕິດຕາມ

ອ່ານຕໍ່ໜ້າ 4

## ບາງຄຳເຫັນ...

(ຕໍ່ຈາກໜ້າ 3)

ກວດກາເບິ່ງຕື່ມວ່າປັດຈຸບັນໄດ້ເຊາະເຈື່ອນໃນລະດັບໃດ? ຈາກນັ້ນ ມາສືບຕໍ່ວາງແຜນຮ່ວມກັນວ່າອັນໃດຈະເຮັດກ່ອນອັນໃດຈະເຮັດນຳຫຼັງ ແລ້ວແບ່ງຄວາມຮັບຜິດຊອບກັນລະຫວ່າງກະຊວງໂຍທາທິການ ແລະ ຂົນສົ່ງ ກັບກະຊວງປ້ອງກັນປະເທດ; ໃນໄລຍະຜ່ານມາ ມີພຽງແຕ່ທ້ອງຖິ່ນຫຼືສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ສະເໜີ, ຄິດວ່າມີຄວາມຫຍຸ້ງຍາກ ຈຶ່ງຢາກໃຫ້ເບິ່ງຕົວຈິງຕື່ມ.

3. ເພື່ອຄຸ້ມຄອງລະບົບເສັ້ນທາງໃຫ້ໄດ້ຮັບຜົນດີ, ຜ່ານມາລັດຖະບານກໍໄດ້ມີຄວາມພະຍາຍາມຫຼາຍ ແລະ ມີຫຼາຍມາດຕະການ. ນອກຈາກການກໍ່ສ້າງ, ສ້ອມແປງ ຢາກສະເໜີໃນບາງຊ່ວງເສັ້ນທາງ ຕາມທີ່ໄດ້ຕິດຕາມກວດກາ ລະຫວ່າງວຽງຈັນຫາໄຊຍະບູລີ ອອກຫາຫຼວງພະບາງເປັນເສັ້ນທາງທີ່ຍາວ, ແຕ່ຍັງບໍ່ທັນມີຈຸດຊັ່ງນ້ຳໜັກ ເຮັດໃຫ້ການຄຸ້ມຄອງເສັ້ນທາງບາງໄລຍະພົບຄວາມຫຍຸ້ງຍາກ; ຖ້າວ່າບໍ່ມີຈຸດຊັ່ງນ້ຳໜັກຖາວອນ ກໍຂໍໃຫ້ມີຈຸດຊົ່ວຄາວ, ຈຸດເຄື່ອນທີ່ ແລະ ໃຫ້ມີການຜັດປ່ຽນກັນໃນແຕ່ລະໄລຍະ, ດ້ານຫຼັກການ 100-200 ກິໂລແມັດກໍອາດຈະມີຈຸດໜຶ່ງ.

4. ສະເໜີໃຫ້ສູນກາງຫຼືລັດຖະບານພິຈາລະນາງົບປະມານຈັດລຽງຄືນ ເພື່ອສືບຕໍ່ຟື້ນຟູເສັ້ນທາງຈາກຊາຍແດນ ໂດຍສະເພາະແມ່ນດ່ານສາກົນຂົວມິດຕະພາບນ້ຳເຫືອງ ລາວ-ໄທ ເຂົ້າສູ່ເມືອງມໍລະດົກໂລກແລະເສັ້ນທາງທີ່ເຊື່ອມລະຫວ່າງໄຊຍະບູລີຫາ ຫົງສາ ແລະ ບັນດາແຂວງພາກເໜືອ, ຜ່ານມາເຄີຍສະເໜີແລ້ວ ແຕ່ບໍ່ຮູ້ວ່າປັດຈຸບັນນີ້ມີຄວາມຄືບໜ້າສ່ຳໃດ.

5. ກ່ຽວກັບງົບປະມານເກີນແຜນ ຖ້າເປັນໄປໄດ້ ຢາກໃຫ້ລັດຖະບານແບ່ງໄປພັດທະນາເສັ້ນທາງລະຫວ່າງທາງໃຫຍ່ຫາດ່ານສາກົນ ໂດຍສະເພາະແມ່ນຢູ່ເມືອງແກ່ນທ້າວນັບແຕ່ການເປີດຂົວມິດຕະພາບນ້ຳເຫືອງລາວ-ໄທ ມາຮອດປັດຈຸບັນນີ້ເສັ້ນທາງດັ່ງກ່າວກໍຍັງບໍ່ທັນໄດ້ຮັບການຟື້ນຟູ; ຜູ້ແທນລົງໄປເຄື່ອນໄຫວແຕ່ລະເທື່ອ ກໍມີປະຊາຊົນສະເໜີ, ເມືອງກໍສະເໜີ ບໍ່ໄດ້ຮັບການພິຈາລະນາ, ຂໍໃຫ້ລັດຖະບານສືບຕໍ່ພິຈາລະນາຕື່ມ.

6. ດັດແກ້ 2 ໂຄງການທີ່ໄດ້ສະເໜີ ເສັ້ນທາງອອກສູ່ຊາຍແດນລະຫວ່າງທົ່ງຕາບຫ້ວຍຕອງ ກັບເສັ້ນທາງເມືອງບໍ່ແຕນຫາຫ້ວຍແຕ ເປັນເສັ້ນທາງອອກສູ່ຊາຍແດນລະຫວ່າງຊາດ ເພື່ອໃຫ້ໄດ້ຮັບປະກັນໃນການຈັດຕັ້ງປະຕິບັດແລະມີຄວາມຄືບໜ້າຂຶ້ນ.



**ທ່ານ ນາງ ທົງຄຳ ໄຊຍະຄົມ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ເຊິ່ງທ່ານມີຄຳເຫັນວ່າ: ໄລຍະນີ້ ກໍແມ່ນໄລຍະສຸມໃສ່ຈັດຕັ້ງປະຕິບັດສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ເຊິ່ງຄຽງຄູ່ກັບການອອກຄຳສັ່ງ, ແຈ້ງການ ແລະ ນິຕິກຳຕ່າງໆໃຫ້ໄດ້ຮັບໝາກຜົນຢ່າງແທ້ຈິງ ແລະ ເຂັ້ມແຂງແທ້ໆ; ຂ້າພະເຈົ້າຢາກຍົກໃຫ້ເຫັນວ່າ ຄຽງຄູ່ກັບການເປັນເຈົ້າຕົນເອງ ແລະ ເອກະລາດນີ້, ມີນັກທຸລະກິດຈຳນວນໜຶ່ງຖືວ່າການດຳເນີນທຸລະກິດ ກໍຢາກດຳເນີນແບບເອກະລາດ ໂດຍທີ່ບໍ່ປະຕິບັດຕາມກົດໝາຍທີ່ບ້ານເມືອງກຳນົດ ປາກົດວ່າມີນັກທຸລະກິດຈຳນວນໜຶ່ງຂຸດຄົ້ນແຮ່ທາດ ບໍ່ວ່າຈະເປັນແຮ່ຄຳຕົກຂ້ອນ, ແຮ່ເຫຼັກ, ແຮ່ຄຳຫຼືແຮ່ອື່ນໆ ໂດຍບໍ່ມີເອກະສານຫຍັງ ກໍສາມາດດຳເນີນການໄດ້; ບັນດາແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ແຈ້ງການຂອງກະຊວງ ໂດຍສະເພາະແມ່ນຄຳສັ່ງເລກທີ 978/ຫສນຍ, ລົງວັນທີ 22 ພຶດສະພາ 2024 ກໍໄດ້ລະບຸຢ່າງຈະແຈ້ງວ່າໃຫ້ຢຸດເຊົາພິຈາລະນາບັນດາໂຄງການໃໝ່ໃນການຂຸດຄົ້ນຄຳຕົກຂ້ອນ, ແຮ່ທາດ ທີ່ມີທາດຕິດພັນ ແລະ ຫ້າມບໍ່ໃຫ້ກະຊວງກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໃນຂອບເຂດທົ່ວປະເທດ ອອກໃບອະນຸຍາດກ່ຽວກັບການຂຸດຄົ້ນແຮ່ທາດຕາມເຂດແມ່ນ້ຳ, ແຕ່ກົງກັນຂ້າມພາຍຫຼັງທີ່ອອກແຈ້ງການນີ້ ບັນດາການຂຸດຄົ້ນແຮ່ທາດດັ່ງກ່າວ ແມ່ນເກີດຂຶ້ນຢ່າງເປັນຂະບວນ. ສະເໜີວ່າຄຽງຄູ່ກັບການອອກນິຕິກຳ ຂໍໃຫ້ໄປຕິດຕາມເບິ່ງວ່າແມ່ນແທ້ຈິງບໍຫຼືວ່ານິຕິກຳດັ່ງກ່າວນັ້ນສັກສິດຄືແນວໃດ? ຢາກສະເໜີໃຫ້ລັດຖະບານຕິດຕາມຕື່ມພາຍຫຼັງທີ່ໄດ້ມີນິຕິກຳແລ້ວ.

ອີກບັນຫາໜຶ່ງກ່ຽວກັບການຄຸ້ມຄອງ: ດຽວນີ້ມີດ່ານຈຳນວນໜຶ່ງນຳສິ່ງໄມ້, ຖ່ານຫຼືສິນຄ້າອື່ນໆທີ່ມີຄຸນຄ່າ ສາມາດສົ່ງອອກຕ່າງປະເທດໂດຍບໍ່ມີເອກະສານ; ຂໍໃຫ້ລັດຖະບານຕິດຕາມ ແລະ ກວດຄືນບັນຫານີ້, ປາກົດການນີ້ມີບໍ່ບາງດ່ານໃນທົ່ວປະເທດ, ເພາະເຮົາຄຸ້ມຄອງເສດຖະກິດເອກະລາດ ແຕ່ນັກທຸລະກິດເຮັດເອກະລາດແລ້ວ, ບາງຈຳນວນບໍ່ໄດ້ສົນໃຈນຳກົດໝາຍບ້ານເມືອງ.

ບັນຫາສຸດທ້າຍກ່ຽວກັບເສັ້ນທາງເປ່ເພ: ລັດຖະບານໄດ້ທຸ່ມງົບປະມານມະຫາສານຈຳນວນຫຼາຍພັນຕື້ ເຂົ້າໃນໂຄງການກໍ່ສ້າງສ້ອມແປງເສັ້ນທາງໃນທົ່ວປະເທດ. ຄິດວ່າວິທີການແກ້ໄຂນີ້ບໍ່ແມ່ນແກ້ໄຂຢູ່ຕົ້ນເຫດ ແມ່ນການແກ້ໄຂທີ່ປາຍເຫດ; ຕົ້ນເຫດແມ່ນຫຍັງ, ຕົ້ນເຫດຂອງການເປ່ເພຂອງຖະໜົນຫົນທາງແມ່ນມາຈາກລົດບັນທຸກນ້ຳໜັກເກີນ ທີ່ແລ່ນຕາມເສັ້ນທາງ. ສະເໜີໃຫ້ລັດຖະບານແກ້ໄຂຢູ່ຈຸດນີ້ ວ່າຈະຄຸ້ມຄອງບັນດາຜູ້ທີ່ລະເມີດນ້ຳໜັກເກີນຕາມຖະໜົນຫົນທາງແນວໃດ.

**ທ່ານ ປອ. ສຸກສະຫວັນ ໄຊສົມບັດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ**



ໄດ້ປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ທ່ານນາຍົກລັດຖະມົນຕີໄດ້ຂຶ້ນລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງມີ 2 ບັນຫາຄື: ຈະມີການປັບຂຶ້ນເງິນເດືອນໃຫ້ພະນັກງານ-ລັດຖະກອນ ໃນປີ 2025 ຕ່ຳສຸດ 2,200,000 ກີບ, ແຕ່ທາງພາກວິສາຫະກິດ ໄດ້ເຫັນແຈ້ງການ ຫຼືວ່າຂໍ້ຕົກລົງຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ແຈ້ງເຖິງວິສາຫະກິດພາກທຸລະກິດຕ່າງໆໃຫ້ປະຕິບັດຕ່ຳສຸດແມ່ນ 2,500,000 ກີບ. ການປັບຂຶ້ນເງິນດັ່ງກ່າວນີ້ ກໍເໝາະສົມສອດຄ່ອງແລ້ວ, ແຕ່ຢາກໃຫ້ແຕ່ງຕັ້ງຄະນະສະເພາະກິດ ລົງໄປກວດກາຕື່ມກ່ຽວກັບລາຄາສິນຄ້າຕາມທ້ອງຕະຫຼາດ, ສັງເກດເຫັນວ່າອັດຕາແລກປ່ຽນຕາມຕາຕະລາງທະນາຄານໄດ້ກຳນົດມານັ້ນຖືວ່າຫຼຸດລົງຫຼາຍ, ເງິນກີບກໍແຂງຄ່າຂຶ້ນ; ແຕ່ມາເບິ່ງລາຄາສິນຄ້າຕາມທ້ອງຕະຫຼາດເຫັນວ່າບໍ່ຍອມລົງ, ຖ້າວ່າບໍ່ແກ້ ບໍ່ກວດກາ ບໍ່ປະຕິບັດວິໄນຕໍ່ຜູ້ຄ້າຂາຍ ກໍຖືວ່າການຂຶ້ນເງິນເດືອນໃຫ້ພະນັກງານ-ລັດຖະກອນບໍ່ວ່າພາກລັດ, ພາກທຸລະກິດ ຈະບໍ່ມີຄວາມໝາຍ, ຈຶ່ງຢາກໃຫ້ມີການຕິດຕາມກວດກາຢ່າງສົມເຫດສົມຜົນ.

ບັນຫາທີ 2 ວຽກງານວັດທະນະທຳ-ສັງຄົມ: ຄືຮູ້ນຳກັນຕັ້ງແຕ່ໄລຍະໂຄວິດ-19 ເຂົ້າມາເຫັນວ່າສະພາບການດ້ານການສຶກສາຫຼຸດລົງຫຼາຍ, ເບິ່ງຜິວເຜີນກໍບໍ່ວິກິດແຕ່ຫາກເບິ່ງໃສ່ຄວາມຈຳເປັນຄວາມສຳຄັນໃນການພັດທະນາຊັບພະຍາກອນມະນຸດ ຖ້າບໍ່ຫາທາງອອກຫາທາງແກ້ໄຂ ຈະເຮັດໃຫ້ສະພາບການຂາດແຄນຊັບພະຍາກອນມະນຸດໃນທຸກຂົງເຂດວຽກງານໃນອະນາຄົດ ກ້າວເຂົ້າສູ່ວິກິດ, ຈຶ່ງຢາກສະເໜີແລກປ່ຽນວ່າລັດຖະບານຄວນອອກນິຕິກຳໃດໜຶ່ງສະເພາະເພື່ອຄຸ້ມຄອງເລື່ອງວຸດທິການສຶກສາ ໂດຍສະເພາະນັກຮຽນ-ນັກສຶກສາທີ່ເຂົ້າຮຽນໃນຊັ້ນຕ່າງໆ ນັບຕັ້ງແຕ່ຊັ້ນກາງ, ຊັ້ນສູງ, ປະລິນຍາຕີ, ປະລິນຍາໂທ, ປະລິນຍາເອກຄວນກຳນົດມີດຳລັດ ມີນິຕິກຳໃຕ້ກົດໝາຍອອກມາເພື່ອໃຫ້ພາກທຸລະກິດກໍຄືພາກລັດ ມີນະໂຍບາຍ, ເງິນວຸດທິແກ່ເຂົາເຈົ້າ ໃຫ້ກຳນົດເປັນເປີເຊັນ ເປັນລະບຽບຫຼັກການອອກມາ; ເລື່ອງການສ້າງຊັບພະຍາກອນມະນຸດ ກໍຄວນມີການວາງແຜນແບບລະອຽດ ຖ້າສ້າງແບບຊະຊາຍອອກມາຈະລົ້ນຕະຫຼາດ ບາງຂະແໜງກໍຫຼາຍ ບາງຂະແໜງພັດບໍ່ມີ ຈຶ່ງຢາກໃຫ້ມີແຜນການລະອຽດວ່າຈະກຳນົດສັດສ່ວນແຕ່ລະຂະແໜງຈຳນວນເທົ່າໃດ ຈະສົມຄວນຮຽນໃນລະດັບຊັ້ນສູງ, ປະລິນຍາຕີ, ປະລິນຍາໂທ, ປະລິນຍາເອກ ເທົ່າໃດ, ຖ້າບໍ່ມີແຜນການ ຈະເຮັດໃຫ້ຜູ້ລົງທຶນໃສ່ການຮຽນເປົ່າປະໂຫຍດ ບໍ່ສາມາດບັນຈຸເຂົ້າໃນຂົງເຂດວຽກງານໃດໜຶ່ງ; ພ້ອມກັນນັ້ນ, ການສອບເສັງຄັດເລືອກເອົາລັດຖະກອນບັນຈຸເຂົ້າໃນຂະແໜງຕ່າງໆນັ້ນ ກໍຄວນໃຫ້ເປັນໄປແບບຍຸຕິທຳ ບໍ່ເຫັນແກ່ຄົນເຜິ່ນຄົນໂຕ, ຖ້າເຮັດໄດ້ແບບນີ້ ຈະເຮັດໃຫ້ຜູ້ຮຽນມີກຳລັງໃຈ ແລະ ຜູ້ປົກຄອງກໍມີກຳລັງໃຈສົ່ງເສຍໃຫ້ລູກຫຼານໄດ້ຮຽນ.

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ການຕ່າງປະເທດ ໄດ້ເຄື່ອນໄຫວຢ້ຽມຢາມ, ທັດສະນະສຶກສາ, ແລກປ່ຽນບົດຮຽນກ່ຽວກັບວຽກງານລັດຖະສະພາ ທີ່ ສສ.ເຢຍລະມັນ.

ການເຄື່ອນໄຫວຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ພົບປະຄະນະນຳຂອງພັກເດີລິນເກ ທີ່ສຳນັກງານການຕ່າງປະເທດຂອງສະຫະພັນທະລັດ Werderscher Markt 1; ພົບປະແລກປ່ຽນບົດຮຽນກ່ຽວກັບການສ້າງແຜນ ແລະ ການອະນຸມັດແຜນງົບປະມານຕ່າງໆຂອງລັດຖະສະພາແຫ່ງລັດ BUNDESRAT (ສະພາສູງ); ພົບປະຄະນະຜູ້ແທນຂອງພັກຝ່າຍຊ້າຍໃນລັດຖະສະພາແຫ່ງສະຫະພັນ ແລະ ຖອດຖອນບົດຮຽນໃນການໂຄສະນາ, ການທ່າຍຖອດສົດ, ການສຳພາດສະມາຊິກລັດຖະສະພາຕໍ່ສື່ມວນຊົນແລະເຂົ້າຢ້ຽມຊົມຕຶກລັດຖະສະພາແຫ່ງສະຫະພັນທະລັດເຢຍລະມັນ DEUTSCHERBUNDESTAG; ພົບປະເຮັດວຽກກັບຄະນະນຳກະຊວງການຕ່າງປະເທດ; ຢ້ຽມຊົມການປະຊຸມໃຫຍ່ຂອງບັນດາທ່ານສະມາຊິກສະພາແຫ່ງລັດ; ແລກປ່ຽນບົດຮຽນກັບຜູ້ອຳນວຍການບໍລິຫານລັດຖະສະພາແຫ່ງລັດແຊັກໂຊນີ; ປຶກສາຫາລືກັບກົມກວດສອບບັນຊີແຫ່ງລັດ ກ່ຽວກັບການກວດສອບພາຍໃນຂອງລັດແຊັກໂຊນີ; ແລກປ່ຽນບົດຮຽນກັບບໍລິສັດໃຫ້ບໍລິການສະໜອງໄຟຟ້າ ແລະ ນ້ຳປະປາ ໃຫ້ແກ່ປະຊາຊົນແຫ່ງລັດແຊັກໂຊນີ; ທັດສະນະສຶກສາຢ້ຽມຊົມຫ້ອງປະຊຸມໃຫຍ່ລັດຖະສະພາ ແຫ່ງ ສສ. ເຢຍລະມັນ ແລະ ລັດຖະສະພາແຫ່ງລັດຕ່າງໆ.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ໄປສະຖານເອກອັກຄະລັດຖະທູດ ແຫ່ງ ສປປລາວ ປະຈຳ ສສ.ເຢຍລະມັນເພື່ອພົບປະໂອ້ລົມຄະນະນຳ-ພະນັກງານຂອງສະຖານທູດ, ນັກສຶກສາ ແລະ ບັນດາຄົນເຊື້ອຊາດລາວ ພ້ອມທັງຮັບຟັງການລາຍງານຈາກທ່ານເອກອັກຄະລັດຖະທູດ ແຫ່ງ ສປປລາວ ປະຈຳນະຄອນຫຼວງແບກແລງກ່ຽວກັບການເຄື່ອນໄຫວວຽກງານຂອງສະຖານທູດ, ນັກສຶກສາ ແລະ ບັນດາຄົນເຊື້ອຊາດລາວ; ສຳລັບການພົວພັນຄົນເຊື້ອຊາດລາວ, ສະຖານເອກອັກຄະລັດຖະທູດ ແຫ່ງ ສປປລາວ ໄດ້ເອົາໃຈໃສ່ເຄື່ອນໄຫວຮ່ວມກັບພີ່ນ້ອງຄົນເຊື້ອຊາດລາວທີ່ຢູ່ເຢຍລະມັນຢ່າງປົກກະຕິ ເພື່ອຮັດແໜ້ນສາຍພົວພັນ, ຮັກສາຄວາມສາມັກຄີ ແລະ ຂະຫຍາຍການພົວພັນຮ່ວມມື ໃຫ້ນັບມື້ກວ້າງຂວາງ, ສ້າງຄວາມເຂົ້າໃຈອັນຖືກຕ້ອງເຊິ່ງສະແດງອອກຜ່ານມາສາມາດຢັ້ງຢືນໄດ້ວ່າພີ່ນ້ອງຄົນເຊື້ອຊາດລາວສ່ວນຫຼາຍແມ່ນມີຄວາມເຂົ້າໃຈຢ່າງຖືກຕ້ອງ, ມີແນວຄິດກ້າວໜ້າ, ຮັບຮູ້ແລະເຫັນໄດ້ສະພາບການຕົວຈິງຂອງ ສປປລາວ, ມີການຍ້ອງຍໍຊົມເຊີຍຜົນສຳເລັດໃນການສ້າງສາພັດທະນາປະເທດຊາດ. ຈາກນັ້ນ, ປະທານກຳມາທິການການຕ່າງປະເທດ ໄດ້ມີຄຳເຫັນໂອ້ລົມ ໂດຍແຈ້ງໃຫ້ຊາບກ່ຽວກັບສະພາບການພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ, ການເຄື່ອນໄຫວໂດຍຫຍໍ້ຂອງສະພາແຫ່ງຊາດລາວ, ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX, ຜົນການຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາ ແຫ່ງຊາດລາວ ທີ່ປະເທດເຢຍລະມັນ; ພ້ອມກັນນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ຄະນະນຳ, ພະນັກງານພາຍໃນສະຖານເອກອັກຄະລັດຖະທູດ, ນັກສຶກສາ ແລະ ພີ່ນ້ອງເຊື້ອຊາດລາວທຸກຄົນ ຈົ່ງຕັ້ງໜ້າປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງຕັ້ງໜ້າ ເພື່ອຜົນປະໂຫຍດຂອງປະເທດຊາດແລະປະຊາຊົນ, ສືບຕໍ່ຮັກສາມູນເຊື້ອຮັກແພງສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ, ເຄື່ອນໄຫວດຳລົງຊີວິດຕະຫຼອດຮອດການທຳມາຫາກິນ ໃຫ້ຖືກຕ້ອງຕາມລະບຽບ-ກົດໝາຍຂອງປະເທດທີ່ຕົນອາໄສຢູ່, ຮັກສາຮີດຄອງປະເພນີວັດທະນະທຳອັນດີງາມຂອງຕົນ ແລະ ຮຽກຮ້ອງພີ່ນ້ອງຄົນເຊື້ອຊາດລາວໃຫ້ຫວນຄືນບ້ານເກີດເມືອງນອນຂອງພວກເຮົາ ເພື່ອປະກອບສ່ວນສ້າງສາ ແລະ ພັດທະນາບ້ານເກີດເມືອງນອນຂອງບັນພະບຸລຸດຕາມເງື່ອນໄຂ ແລະ ຄວາມສາມາດ.



## ກອງປະຊຸມ ...

(ຕໍ່ຈາກໜ້າ 1)

ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍເປັນຕົ້ນ ໜັງສືສະເໜີຂອງລັດຖະບານ ກ່ຽວກັບຮ່າງລັດຖະບັນຍັດວ່າດ້ວຍພັນທະອາກອນແບບເດັດຖານສະເພາະທຸລະກິດກາຊີໂນ; ໜັງສືສະເໜີຂອງລັດຖະບານກ່ຽວກັບການສະເໜີຂໍຍົກເວັ້ນພາສີ-ອາກອນຂອງພາຫະນະຈຳນວນໜຶ່ງ; ໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍໃຫ້ຄະນະປະຈຳສະພາແຫ່ງຊາດຮັບຮູ້, ຮັບຮອງ ແລະ ຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ພົວພັນກັບສັນຍາກໍ່ສ້າງ-ດຳເນີນງານ-ມອບໂອນ (BOT) ສະບັບດັດແກ້ຄັ້ງທີ 1 ໂຄງການເຂື່ອນໄຟຟ້າເຊຂະໜານ3; ໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ພົວພັນກັບໂຄງການເຂື່ອນໄຟຟ້ານ້ຳຂອງປາກລາຍ ແລະ ໂຄງການເຂື່ອນໄຟຟ້ານ້ຳຂອງປາກແບງ; ໜັງສືສະເໜີຂອງລັດຖະບານກ່ຽວກັບການຂໍຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ແລະ ຂໍຕໍ່ອາຍຸສັນຍາວ່າດ້ວຍການຊອກຄົ້ນ ແລະ ສຳຫຼວດແຮ່ຄຳຢູ່ເມືອງຊະນະຄາມແຂວງວຽງຈັນ; ບົດລາຍງານຜົນການຮຽບຮຽງເນື້ອໃນກົດໝາຍທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຈຳນວນ 7 ສະບັບ ຄື: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການກວດສອບອິດສະຫຼະ, ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການພັດທະນາສີມືແຮງງານ (ສ້າງໃໝ່), ກົດໝາຍວ່າດ້ວຍສະຫະພັນແມ່ຍິງ, ກົດໝາຍວ່າດ້ວຍການພັດທະນາແລະປົກປ້ອງແມ່ຍິງ; ບົດລາຍງານຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີIX; ບົດລາຍງານການຄົ້ນຄວ້າ ແລະ ປັບປຸງຮ່າງລັດຖະທຳມະນູນ ຕາມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ແລະ ລາຍງານແຜນການທາບທາມຄຳເຫັນຮ່າງລັດຖະທຳມະນູນປີ 2025; ລາຍງານການຄົ້ນຄວ້າການສະເໜີແຕ່ງຕັ້ງບຸຄະລາກອນຂອງສານປະຊາຊົນ; ພິຈາລະນາຄຳຮ້ອງຂໍຄວາມເປັນທຳຈຳນວນໜຶ່ງ.

**(ນາງ ອາລິນ ສຸພົມມະປະດິດ)**



## ທາລື...

(ຕໍ່ຈາກໜ້າ 1)

ຕິດພັນເຖິງສິດຜົນປະໂຫຍດຂອງພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ແລະ ຍາດພີ່ນ້ອງ ໂດຍສະເພາະແມ່ນນະໂຍບາຍດ້ານຕ່າງໆ ບໍ່ວ່າຈະເປັນນະໂຍບາຍເຈັບເປັນ ຫຼື ເສຍຊີວິດ; ພ້ອມກັນນີ້, ຍັງເປັນນະໂຍບາຍລວມຂອງພັກ-ລັດກຳນົດອອກໃນແຕ່ລະໄລຍະ.

ບັນດາຜູ້ເຂົ້າຮ່ວມໄດ້ເປັນເຈົ້າການລົງເລິກຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ພ້ອມທັງສົມທຽບໃສ່ລະບຽບການປະຕິບັດນະໂຍບາຍຂອງ 3 ອົງການຈັດຕັ້ງມະຫາຊົນ ສພຊ ທີ່ມີນິຕິກຳສະເພາະຂອງແຕ່ລະອົງການ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອານິຕາ ມ່ວນສະຫວັດ)**

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ທັງນີ້, ກໍເພື່ອນຳເອົາຄຳເຫັນຂອງສະມາຊິກສະພາແຫ່ງຊາດ(ສສຊ) ທີ່ໄດ້ປະກອບໃສ່ຮ່າງກົດໝາຍສອງສະບັບນີ້ມາພິຈາລະນາ, ປັບປຸງໃສ່ເນື້ອໃນສອງຮ່າງກົດໝາຍໃຫ້ມີຄວາມຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ.

ທ່ານສົມມາດພົລເສນາ ກ່າວວ່າ: ກອງປະຊຸມຄັ້ງນີ້ແມ່ນການຄົ້ນຄວ້າບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ ທີ່ເຫັນວ່າມີເຫດມີຜົນເພື່ອປັບປຸງໃສ່ກົດໝາຍ 2 ສະບັບດັ່ງກ່າວ ແນໃສ່ເຮັດໃຫ້ເນື້ອໃນຂອງ 2 ກົດໝາຍ ມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້; ເພື່ອຮັບປະກັນໃຫ້ບັນດາຄຳເຫັນທີ່ສະມາຊິກສະພາແຫ່ງຊາດ ໄດ້ປະກອບໃສ່ໄດ້ຮັບການຄົ້ນຄວ້າພິຈາລະນາຢ່າງເລິກເຊິ່ງນັ້ນ ໃຫ້ພ້ອມກັນຄົ້ນຄວ້າຕື່ມຕໍ່ຄຳເຫັນທີ່ບໍ່ສາມາດປັບປຸງໄດ້ນັ້ນຄະນະຮັບຜິດຊອບໄດ້ໃຫ້ເຫດຜົນພຽງພໍແລ້ວບໍ່ ຫຼື ຄວນຕ້ອງໄດ້ປັບປຸງຄືແນວໃດ.

ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າ, ພິຈາລະນາຄືນແຕ່ລະບັນຫາທີ່ ສສຊ ຕັ້ງຂຶ້ນ ແລະ ບັນຫາອື່ນໆ ຢ່າງເລິກເຊິ່ງ ແລະ ຮອບດ້ານໃສ່ເນື້ອໃນ 2 ກົດໝາຍດັ່ງກ່າວ.

**(ສອນສັກ ວັນວິໄຊ)**

## ກອດກາ ...

(ຕໍ່ຈາກໜ້າ 1)

ສັງຄົມແຫ່ງຊາດ, ກຳມະການ ຄລຊ; ມີທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານ ຄລຊ ພ້ອມດ້ວຍບັນດາທ່ານໃນຄະນະກຳມະການ, ກອງເລຂາ, ອະນຸກຳມະການຕ່າງໆ ແລະ ກອງເລຂາຊ່ວຍວຽກຂອງ ຄລຊ ເຂົ້າຮ່ວມ 80 ທ່ານ.

ທ່ານ ປອ. ກອງແກ້ວ ໄຊສົງຄາມ ກ່າວວ່າ: ຈຸດປະສົງ ແລະເນື້ອໃນຕົ້ນຕໍຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອຄົ້ນຄວ້າ, ຮຽບຮຽງແລະກວດກາເນື້ອໃນຮອບດ້ານຂອງຮ່າງລັດຖະທຳມະນູນສະບັບປັບປຸງ ຕາມຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ແລະ ທິດຊີ້ນຳຂອງກອງປະຊຸມຄົບຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ຄັ້ງວັນທີ 24 ທັນວາ 2024 ກ່ອນນຳໄປທາບທາມຄວາມເຫັນຂອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ໃນຕົ້ນປີ 2025.

ທີ່ປະຊຸມໄດ້ຮັບຟັງການສະເໜີສັງລວມຄຳເຫັນຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປັບປຸງ 2025 ແລະ ຮ່າງບົດລາຍງານຂອງຄລຊກ່ຽວກັບການປັບປຸງລັດຖະທຳມະນູນ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳເຫັນຕໍ່ການປັບປຸງຮ່າງລັດຖະທຳມະນູນຢ່າງກົງໄປກົງມາ, ພາວະວິໄສ ແລະ ດ້ວຍຄວາມຮັບຜິດຊອບສູງເຮັດໃຫ້ກອງປະຊຸມຄັ້ງນີ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**(ສອນສັກ ວັນວິໄຊ)**



## ຄົ້ນຄວ້າ ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 3-4 ມັງກອນຜ່ານມາ ທີ່ເມືອງແກ້ວອຸດົມ, ແຂວງວຽງຈັນ ໄດ້ມີກອງປະຊຸມຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນປະຫວັດສາດ ຂອງສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ຮອງຫົວໜ້າຄະນະຄົ້ນຄວ້າແລະຮຽບຮຽງປະຫວັດສາດຂອງສະພາແຫ່ງຊາດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ມີບັນດາຄະນະຮັບຜິດຊອບຈາກກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ (ສພຊ), ສະຖາບັນຄົ້ນຄວ້າປະຫວັດສາດ ແລະ ບູຮານວິທະຍາ (ສວສຊ), ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ) ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຸບັນ ສະວະບຸດ ກ່າວວ່າ: ການຈັດກອງປະຊຸມໃນຄັ້ງນີ້ແມ່ນເພື່ອເປັນການທົບທວນຄືນ ຕໍ່ບັນດາຄຳຄິດເຫັນຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ທິດຊີ້ນຳຂອງຫົວໜ້າຄະນະຮັບຜິດຊອບຕາມການຕີລາຄາຕໍ່ໂຄງຮ່າງ ແລະ ເນື້ອໃນແລ້ວ ພວກເຮົາຈະຕ້ອງໄດ້ປັບປຸງແລະຮຽບຮຽງຄືນ ເພື່ອໃຫ້ຮ່າງໂຄງບົດ ແລະ ເນື້ອໃນຂອງຮ່າງບົດປະຫວັດສາດນັ້ນມີຄວາມຈະແຈ້ງ, ຮັດກຸມ ແລະ ເປັນລະບົບ.

ກອງປະຊຸມ ໄດ້ສຸມໃສ່ຄົ້ນຄວ້າ ແລະ ຮຽບຮຽງ ບັນດາເນື້ອໃນ ຂອງ ພາກທີ I ຂະບວນວິວັດການກຳເນີດສະພາປະຊາຊົນສູງສຸດ, ພາກທີ II ສະພາປະຊາຊົນສູງສຸດ ໃນພາລະກິດການປະຕິບັດສອງໜ້າທີ່ຍຸດທະສາດ ແລະ ແນວທາງປ່ຽນແປງໃໝ່ຂອງການປະຕິວັດລາວ (1975-1992), ພາກທີ III ສະພາແຫ່ງຊາດ ໃນຖານະອົງການນິຕິບັນຍັດ ທີ່ປະຕິບັດພາລະບົດບາດອັນຄົບຖ້ວນ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ສປປລາວ ແລະ ພາກທີ IV ສະຫຼຸບສັງລວມຂອງຮ່າງປຶ້ມ 50 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຂອງສະພາແຫ່ງຊາດແຫ່ງ ສປປລາວ (2 ທັນວາ 1975-2 ທັນວາ 2025) ເພື່ອເຮັດໃຫ້ໂຄງຮ່າງແລະເນື້ອໃນຂອງບົດດັ່ງກ່າວມີຄວາມອຸດົມສົມບູນຄົບຖ້ວນທາງດ້ານເນື້ອໃນ ແລະ ຮູບການ, ຖືກຕ້ອງຕາມສະພາບຄວາມເປັນຈິງ ແລະ ສອດຄ່ອງກັບຂໍ້ມູນຫຼັກຖານກ່ຽວຂ້ອງ ເພື່ອກຽມນຳເຂົ້າລາຍງານຕໍ່ຫົວໜ້າຄະນະຮັບຜິດຊອບຄົ້ນຄວ້າແລະຮຽບຮຽງປະຫວັດສາດຂອງສະພາແຫ່ງຊາດ ໄດ້ພິຈາລະນາ ແລະ ມີຄຳເຫັນຕໍ່ການຈັດຕັ້ງປະຕິບັດວຽກງານຈຸດສຸມ ປີ 2025 ໃນຂັ້ນຕໍ່ໄປໃຫ້ທັນຕາມແຜນການທີ່ວາງໄວ້.

**(ຄຳສິງ ທາດາສະຫວັນ)**

## ສພຂ ຫຼວງນໍ້າທາ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8



(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ (ສພຂ) ຫຼວງນໍ້າທາ ຊຸດທີ II ໄດ້ສຳເລັດໃນຕອນແລງວັນທີ 27 ທັນວາ 2024 ທີ່ສະໂມສອນຂອງແຂວງ ພາຍຫຼັງດຳເນີນມາເປັນເວລາ 4 ວັນ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ, ມີທ່ານ ວຽງສະຫວັດ ສີພັນດອນ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງໆຫຼວງນໍ້າທາ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3, ຄະນະປະຈຳແລະກຳມະການພັກແຂວງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ແຂກຖືກເຊີນ ພ້ອມດ້ວຍບັນດາທ່ານອະດີດການນຳຂອງແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 3 ແລະ ສສຂ ຫຼວງນໍ້າທາເຂົ້າຮ່ວມ 150 ກວ່າທ່ານ.

ກອງປະຊຸມຄັ້ງນີ້ ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງຫຼວງນໍ້າທາຄື: ການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງ ໃນລະຫວ່າງກອງປະຊຸມສະໄໝສາມັນເທື່ອທີ 7 ຫາເທື່ອທີ 8; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024, ທິດທາງແຜນການປະຈຳປີ 2025 ແລະ ຜົນການກວດກາຕາມຜົນຂອງການກວດສອບປີ 2022; ບົດລາຍງານຂອງອົງການກວດສອບປະຈຳພາກເໜືອ 2 ກ່ຽວກັບຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024, ທິດທາງແຜນການປະຈຳປີ 2025 ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2023 ຂອງແຂວງຫຼວງນໍ້າທາ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງອົງການໄອຍະການປະຊາຊົນ ແລະສານປະຊາຊົນແຂວງ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງສະພາປະຊາຊົນແຂວງ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາກິລາກາຍະກຳ ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ; ການຈັດຕັ້ງປະຕິບັດແຜນຟື້ນຟູ-ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າທາ 1 ເມືອງນາແລ ໄລຍະທີ 1 (2020-2023) ແລະ ແຜນການໄລຍະທີ 2 (2025-2028).

ນອກຈາກນີ້, ຍັງໄດ້ຮັບຟັງ ແລະ ປະກອບຄຳເຫັນໃສ່ບົດລາຍງານກ່ຽວກັບຜົນກະທົບຈາກໄພພິບັດນໍ້າຖ້ວມຢູ່ແຂວງຫຼວງນໍ້າທາ ໃນປີ 2024, ການປະກອບຄຳເຫັນຂອງອົງການແນວລາວສ້າງຊາດແຂວງ ກ່ຽວກັບການຕິດຕາມກວດກາການເຄື່ອນໄຫວວຽກງານໃນໜຶ່ງປີຜ່ານມາ ແລະທິດທາງແຜນການໜຶ່ງປີຕໍ່ໜ້າ ຂອງສະພາປະຊາຊົນແຂວງ.

**(ນາງ ວັນນີ ແສງບົວພັນ)**

## ກອງປະຊຸມຄົບຄະນະຂອງຄະນະກຳມະການ ແລະ ສະຫຼຸບວຽກງານຂອງຄະນະເລຂາທິການ ສພຂ ບໍລິຄຳໄຊ



(ສພຂ) - ກອງປະຊຸມຄົບຄະນະຂອງຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ໄດ້ຈັດຂຶ້ນໃນວັນທີ 23 ທັນວາ 2024 ໂດຍການເປັນປະທານຂອງທ່ານ ໃສຄຳ ທອງລັດ ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຕາງໜ້າພະແນກການ ແລະ ອົງການອ້ອມຂ້າງແຂວງພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຈາກເລຂາທິການສະພາປະຊາຊົນແຂວງ ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ພ້ອມທັງກຳນົດທິດທາງແກ້ໄຂໃນຕໍ່ໜ້າ ໂດຍໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນຖານະທີ່ເປັນເສນາທິການໃຫ້ແກ່ຄະນະປະຈຳ ກໍຄືສະພາປະຊາຊົນແຂວງ ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ, ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງຄະນະປະຈຳ ສພຂ ແລະ ຄະນະ ສສຊ ປະຈຳເຂດເລືອກຕັ້ງ, ການຄຸ້ມຄອງວຽກງານບໍລິຫານ-

ອ່ານຕໍ່ໜ້າ 9

## ສພຂ ໄຊຍະບູລີ ຮັບຮອງການແຕ່ງຕັ້ງບຸກຄະລາກອນ 2 ຕຳແໜ່ງ




(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ໄດ້ປິດລົງຢ່າງເປັນທາງການໃນຕອນບ່າຍຂອງວັນທີ 28 ທັນວາຜ່ານມາ ທີ່ຫ້ອງປະຊຸມໃຫຍ່ໂຮງຮຽນທິດສະດີການເມືອງການປົກຄອງແຂວງ ພາຍຫຼັງທີ່ດຳເນີນມາເປັນເວລາ 3 ວັນເຄິ່ງ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ທ່ານ ພົງສະຫວັນ ສິດທະວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆໄຊຍະບູລີ, ບັນດາທ່ານສະມາຊິກສະພາ ແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແລະ ສະມາຊິກສະພາປະຊາຊົນແຂວງ, ຄະນະປະຈຳ ແລະ ກຳມະການພັກແຂວງ, ອະດີດການນຳຂອງແຂວງ ແລະ ສສຊ ປະຈຳເຂດເລືອກຕັ້ງ, ນັກປະຕິວັດອາວຸໂສ-ບຳນານ, ຜູ້ຊົງຄຸນວຸດທິ, ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ນາຍບ້ານເທດສະບານ, ນັກທຸລະກິດ, ຜູ້ປະກອບການ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງໄຊຍະບູລີ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດໃນຕໍ່ໜ້າດັ່ງນີ້:

1. ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ແຜນ ການປະຈຳປີ 2025 ຕິດພັນກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງເຊິ່ງໄດ້ຮັບຜົນສຳເລັດໃນຫຼາຍດ້ານ ເປັນຕົ້ນອັດຕາການເຕີບ ໂຕເສດຖະກິດ ບັນລຸໄດ້ 5.4%, ເກັບລາຍຮັບງົບປະມານເກີນແຜນທີ່ກຳນົດໄວ້ 12.19%; ການປະຕິບັດແຜນການປີ 2025 ເສດຖະກິດຂະຫຍາຍຕົວ ໃຫ້ບັນລຸໃນລະດັບ 5% ຂຶ້ນໄປ, ເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ 2,765.39 ຕື້ກີບ.

2. ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງອົງການກວດສອບພາກເໜືອ 1, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ 2023, ບົດລາຍງານຂອງອົງການກວດກາລັດແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກ ງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2022.

3. ການຈັດຕັ້ງປະຕິບັດວຽກງານສາມສ້າງ ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

4. ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງສະພາປະຊາຊົນແຂວງ.

5. ຍົກຍ້າຍ, ແຕ່ງຕັ້ງບຸກຄະລາກອນຂອງແຂວງ ຈຳນວນ 2 ທ່ານຄື: ທ່ານ ຄຳເພັດ ພົມມະລາດ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ໄປເປັນຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ, ທ່ານ ສົມມະນາ ປິ່ນທິບ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄປເປັນຫົວໜ້າອົງການໄອຍະການປະຊາຊົນ.

6. ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ (ສະບັບປັບປຸງ).

ກອງປະຊຸມສະເໜີໃຫ້ສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ ສືບຕໍ່ປັບປຸງການຈັດຕັ້ງ ແລະ ກົນໄກປະສານງານຂອງ 4 ພາກສ່ວນ ໃຫ້ມີຄວາມກົມກຽວ, ຕໍ່ເນື່ອງ ແລະ ປົກກະຕິ; ດຳເນີນຄະດີຕາມຂະບວນການຍຸຕິທຳຢ່າງເຂັ້ມງວດ, ວ່ອງໄວ ແລະ ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍກຳນົດໄວ້; ສືບຕໍ່ປະຕິບັດຄາດໝາຍການຖະແຫຼງການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ການປະເມີນຜູ້ພິພາກສາດີ-ເກັ່ງ ໃຫ້ບັນລຸຕາມແຜນທີ່ວາງໄວ້; ສຶກສາອົບຮົມ ແລະ ບຳລຸງສ້າງບຸກຄະລາກອນຂອງຕົນ ໃຫ້ມີຄວາມໜັກ ແໜ້ນເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ມີຈັນຍາບັນ, ຈັນຍາທຳ ໃນການປະຕິບັດໜ້າທີ່ວຽກງານເພື່ອສ້າງຄວາມເຊື່ອໝັ້ນໃຫ້ສັງຄົມຕໍ່ການດຳເນີນຄະດີ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນໄດ້ເຂົ້າ ເຖິງຂະບວນຍຸຕິທຳຢ່າງທົ່ວເຖິງ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ.

ນອກຈາກນີ້, ຍັງໄດ້ຮັບຟັງການປະກອບຄຳເຫັນຂອງແນວລາວສ້າງຊາດ ເຊິ່ງຕາງໜ້າໃຫ້ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ຕໍ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງຕະຫຼອດປີ 2024; ການປະກອບຄຳເຫັນຈາກຕາງໜ້າຄະນະປະຈຳ ສພຂ ຕໍ່ບັນດາບົດລາຍ ງານທີ່ອົງການປົກຄອງແຂວງ ກໍຄືພະແນກການ, ອົງການ, ກົມກອງ ທີ່ໄດ້ນຳມາສະເໜີຕໍ່ກອງປະ ຊຸມ; ການຊີ້ແຈງເພີ່ມຕື່ມຈາກທ່ານເຈົ້າແຂວງ ເຊິ່ງໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາສຳຄັນທີ່ສັງຄົມສົນໃຈ.

**(ນາງ ອາລິນ ສຸພົມມະປະດິດ)**

# ຄປຈສພຂ ຄໍາມ່ວນ ຕິດຕາມກວດກາ ການປະຕິບັດວຽກງານຢູ່ 5 ເມືອງ



(ສພຂ)-ວັນທີ16-23 ທັນວາ 2024 ທ່ານ ນາງ ບົງອອນ ໄຊຍະສິດຄະນະປະຈໍາພັກແຂວງ, ຮອງປະທານຄະນະປະຈໍາສະພາປະຊາຊົນແຂວງ(ຄປຈ ສພຂ) ຄໍາມ່ວນ ພ້ອມດ້ວຍບັນດາທ່ານກໍາມະການຄປຈ ສພຂ ແລະ ສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈໍາເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການ ຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 6-7 ຂອງ ສພຂ ຄໍາມ່ວນ ຕິດພັນກັບການແກ້ໄຂຄໍາຮ້ອງ-ຄໍາສະເໜີຂອງປະຊາຊົນ ຢູ່ 5 ເມືອງຄື: ຫີນບູນ, ຄູນຄໍາ, ນາກາຍ, ຍົມມະລາດ ແລະ ມະຫາໄຊ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມເຮັດວຽກຂອງບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງ, ຄະນະປະຈໍາ ແລະ ກໍາມະການພັກເມືອງ, ຫົວໜ້າ/ຮອງຫົວໜ້າຫ້ອງການແລະຂະແໜງການທີ່ກ່ຽວຂ້ອງຂອງເມືອງ.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງການລາຍງານຂອງບັນດາເມືອງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງເມືອງປະຈໍາ11ເດືອນ ປີ 2024, ການຈັດຕັ້ງປະຕິບັດວຽກງານຂອງບັນດາຫ້ອງການທີ່ກ່ຽວຂ້ອງ, ວຽກງານຂົງເຂດຍຸຕິທໍາ ແລະ ທິດທາງແຜນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ; ຈາກນັ້ນ, ທ່ານ ນາງ ບົງອອນ ໄຊຍະສິດ, ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງປະຈໍາເຂດເລືອກຕັ້ງເມືອງ ໄດ້ມີຄໍາຊັກຖາມເຈາະຈີ້ມບາງບັນຫາທີ່ມີຄວາມສົນໃຈໃນການຈັດຕັ້ງປະຕິບັດວຽກງານ, ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມ, ໄດ້ພ້ອມກັນແລກປ່ຽນຄໍາຄິດຄໍາເຫັນແລະຕອບຂໍ້ຊັກຖາມຢ່າງກົງໄປກົງມາ ແລະ ພາວະວິໄສ ທັງນີ້, ກໍເພື່ອເປັນຂໍ້ມູນເບື້ອງຕົ້ນໃຫ້ແກ່ຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ, ສະມາຊິກສະພາປະຊາຊົນຂັ້ນແຂວງ ນໍາມາວິເຄາະ, ວິໄຈ ແລະ ເປັນຂໍ້ມູນພື້ນຖານໃນການຄົ້ນຄວ້າປະກອບຄໍາເຫັນຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ II ທີ່ຈະໄດ້ໄຂຂຶ້ນໃນໄວໆນີ້ ແລະ ເພື່ອບັນລຸເປົ້າໝາຍໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານມີຄວາມໂປ່ງໃສ,ເປັນທໍາແລະຖືກຕ້ອງຕາມກົດໝາຍ ທັງເຮັດໃຫ້ວຽກງານຕິດຕາມກວດກາ ແລະ ແກ້ໄຂຄໍາຮ້ອງທຸກຂອງປະຊາຊົນ ມີປະສິດທິຜົນຍິ່ງຂຶ້ນ.

ໂອກາດເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ບັນດາເມືອງ, ທ່ານ ນາງ ບົງອອນ ໄຊຍະສິດ ໄດ້ມີຄໍາເຫັນໂອ້ລົມເຊິ່ງທ່ານສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານໃນການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ ແລະ ຕີລາຄາສູງຕໍ່ຜົນງານທີ່ຄະນະນໍາຂອງເມືອງແລະຂະແໜງການຍາດມາໄດ້; ພ້ອມດຽວກັນນັ້ນ, ກໍເນັ້ນໜັກຕໍ່ອົງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຊີ້ນໍາທຸກຂະແໜງການຢູ່ຂັ້ນເມືອງຂອງຕົນໃນການເຄື່ອນໄຫວປະຕິບັດພາລະບົດບາດ ເປັນຕົ້ນແມ່ນການຄຸ້ມຄອງເກັບລາຍຮັບຂອງຖານລາຍຮັບຢູ່ພາຍໃນເມືອງ ໃຫ້ລະອຽດ ຈະແຈ້ງ ແລະ ຄົບຖ້ວນ ເພື່ອເຮັດໃຫ້ລາຍຮັບງົບປະມານຂອງເມືອງເພີ່ມສູງຂຶ້ນຕາມລະດັບຄາດໝາຍ; ເອົາໃຈໃສ່ປົກປ້ອງສິດຜົນປະໂຫຍດຂອງລັດ, ສັງຄົມ, ຜົນປະໂຫຍດອັນຊອບທໍາຂອງປະຊາຊົນ; ເປັນເຈົ້າການໃນການປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ວຽກງານຍຸຕິທໍາ; ຕັ້ງໜ້າໂຄສະນາເຜີຍແຜ່ກົດໝາຍ,ສຶກສາອົບຮົມພົນລະເມືອງ ໃຫ້ຮັບຮູ້ເຂົ້າໃຈ, ມີສະຕິເຄົາລົບກົດໝາຍສູງຂຶ້ນ.

ນອກນັ້ນ, ຄະນະຍັງໄດ້ລົງເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ວຽກງານຢູ່ພາກສະໜາມຂອງແຕ່ລະຈຸດຄື: ຄ້າຍຄຸມຂັງຂອງບັນດາເມືອງ, ໂຮງໝໍນ້ອຍ, ໂຮງຮຽນ, ເຂດບໍລິສັດທີ່ເຊົ່າສໍາປະທານແລະໂຄງການລົງທຶນຕ່າງໆ.

ງົບປະມານການເຄື່ອນໄຫວວຽກງານຄັ້ງນີ້ ໄດ້ຮັບການສະໜັບສະໜູນໂດຍໂຄງການຂອງມູນນິທິເວສມິນສະເຕີ ເພື່ອປະຊາທິປະໄຕ (WFD Laos).

**(ເອື້ອ ມະໂນສີງ)**

# ສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 8 ສພຂ ສະຫວັນນະເຂດ



(ສພຂ) - ພາຍຫຼັງທີ່ດໍາເນີນມາເປັນເວລາ 4 ວັນ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ໄດ້ປິດລົງຢ່າງເປັນທາງການໃນວັນທີ 27 ທັນວາຜ່ານມາ ທີ່ຫໍວັດທະນະທໍາ ໄກສອນ ພົມວິຫານ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານ ສພຂ; ມີທ່ານ ບຸນໂຈມ ອຸບົນປະເສີດເຈົ້າແຂວງໆສະຫວັນນະເຂດ, ບັນດາການນໍາຂັ້ນແຂວງ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນສໍາຄັນຂອງແຂວງສະຫວັນນະເຂດ ດັ່ງນີ້:

1. ການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບການສຶກສາແລະພັດທະນາຊັບພະຍາກອນມະນຸດໃນໄລຍະຜ່ານມາ;
2. ການສະເໜີຍົກຍ້າຍ, ແຕ່ງຕັ້ງ ພະນັກງານນໍາພາຄຸ້ມຄອງຂັ້ນແຂວງ ຈໍານວນ4ທ່ານ;
3. ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈໍາປີ 2024 ແລະ ທິດທາງແຜນການປະຈໍາປີ 2025, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈໍາປີ 2023 ຂອງອົງການກວດສອບປະຈໍາພາກພາງ 2;
4. ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈໍາປີ 2024 ແລະ ທິດທາງແຜນການປະຈໍາປີ 2025, ບົດລາຍງານການແກ້ໄຂຜົນການກວດກາຕາມຜົນການກວດສອບປະຈໍາປີ 2023 ຂອງອົງການກວດກາລັດແຂວງ;
5. ການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈໍາປີ 2024 ແລະ ທິດທາງແຜນການປະຈໍາປີ 2025 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ;
6. ຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈໍານວນ 3 ສະບັບ, ສ້າງໃໝ່ 1 ສະບັບຄື: ຮ່າງຂໍ້ຕົກລົງຂອງທ່ານເຈົ້າ ແຂວງ ວ່າດ້ວຍການຄຸ້ມຄອງທີ່ດິນວັດທະນະທໍາພາຍໃນແຂວງສະຫວັນນະເຂດ, ປັບປຸງ 2 ສະບັບຄື: 1) ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງພາຍໃນແຂວງສະຫວັນນະເຂດ, 2) ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍແລະກາງ;
7. ການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈໍາປີ 2024 ແລະ ທິດທາງແຜນການປະຈໍາປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ II;
8. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງປະຈໍາປີ2024ແລະທິດທາງແຜນການປະຈໍາປີ2025.

ກອງປະຊຸມຮຽກຮ້ອງຄະນະປະຈໍາສະພາປະຊາຊົນແຂວງ, ບັນດາຄະນະກໍາມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ-ນະຄອນ, ອົງການປົກຄອງແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຜັນຂະຫຍາຍມະຕິກອງປະຊຸມຄັ້ງນີ້ເຂົ້າໃນການປະຕິບັດວຽກງານໃຫ້ໄດ້ຮັບຜົນສໍາເລັດເປັນຢ່າງດີ.

**(ນາງ ກຸກກິກ ບຸດດາໄຊ)**

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບ ອົງການປົກຄອງແຂວງເຊກອງ




(ສພຂ) - ກອງປະຊຸມຮ່ວມລະຫວ່າງຄະນະປະຈໍາສະພາປະຊາຊົນແຂວງ (ຄປຈສພຂ) ເຊກອງ ກັບ ອົງການປົກຄອງແຂວງ ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 23 ທັນວາ 2024 ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ແລະ ທ່ານ ຂັນຕີ ສີລະວົງສາ ຄະນະປະຈໍາພັກແຂວງ, ຮອງເຈົ້າແຂວງ, ມີບັນດາທ່ານຄະນະປະຈໍາພັກແຂວງ, ຄປຈ ສພຂ,ຮອງປະທານຄະນະກໍາມະການ ສພຂ ແລະ ພະແນກການ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຂັນຕີ ສີລະວົງສາ ກ່າວວ່າ: ຈຸດປະສົງຂອງກອງປະຊຸມແມ່ນເພື່ອປຶກສາຫາລື, ແລກປ່ຽນຄໍາຄິດ ເຫັນ ແລະ ກ້າວໄປເຖິງການສ້າງຄວາມເປັນເອກະພາບຕໍ່ບັນດາເນື້ອໃນ ກໍຄືຫົວຂໍ້ທີ່ຢູ່ໃນຄວາມຮັບຜິດຊອບຂອງອົງການປົກຄອງແຂວງ ທີ່ຈະນໍາເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ຈະໄຂຂຶ້ນໃນໄວໆນີ້;ພ້ອມກັນນັ້ນ, ກໍປຶກສາຫາລືເພື່ອເອກະພາບ ແລະ ເປັນບ່ອນອີງໃນການແກ້ໄຂບັນຫາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ປາກົດການຫຍໍ້ທໍ້ຕ່າງໆ ແນໃສ່ເຮັດໃຫ້ມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ,ສັງຄົມມີຄວາມສະຫງົບປອດໄພ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງນັບມື້ດີຂຶ້ນ ທັງເປັນການຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທໍາມະນູນແລະກົດໝາຍຂອງບັນດາອົງການລັດຂັ້ນຕ່າງໆ. ນອກນັ້ນ, ກໍພ້ອມກັນຕີລາຄາແລະ ຖອດຖອນບົດຮຽນກ່ຽວກັບກົນໄກການປະສານງານລະຫວ່າງອົງການປົກຄອງແຂວງ ກັບ ສະພາປະຊາຊົນແຂວງ.

ກອງປະຊຸມບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ກໍານົດໄວ້ເຊິ່ງອົງການປົກຄອງແຂວງຈິງໃຈຮັບເອົາບັນດາຄໍາຄິດເຫັນທີ່ຫຼາກຫຼາຍ, ສ້າງສັນແລະເປັນປະໂຫຍດຈາກສະພາປະຊາຊົນແຂວງ ໄປຄົ້ນຄວ້າປັບປຸງໃນການປະຕິບັດພາລະໜ້າທີ່ໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງແລະພ້ອມກັນເພີ່ມທະວີຈັດຕັ້ງປະຕິບັດໜ້າທີ່ຂອງຕົນບົນຈິດໃຈຫັນປ່ຽນຢ່າງແຂງແຮງ ເລິກເຊິ່ງ ຮອບດ້ານ ເພື່ອນໍາເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນ ກໍຄືແຂວງເຊກອງ; ພ້ອມນີ້,ກອງປະຊຸມຍັງໄດ້ຊີ້ນໍາໃຫ້ພະແນກການແລະຄະນະກໍາມະການທີ່ກ່ຽວຂ້ອງຂອງ ສພຂ ສືບຕໍ່ເຮັດວຽກຮ່ວມກັນ ເພື່ອກ້າວໄປເຖິງສ້າງຄວາມເປັນເອກະພາບທາງດ້ານຕົວເລກຄາດໝາຍໃຫຍ່ໆ ມີບ່ອນອີງໜັກແໜ້ນ. ໃນຕໍ່ໜ້າ, ອົງການປົກຄອງແຂວງ ແລະ ສພຂ ຈະສືບຕໍ່ເພີ່ມທະວີການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກທີ່ວາງອອກໃນແຕ່ລະໄລຍະເຂົ້າໃນການເຄື່ອນໄຫວວຽກງານຂອງຕົນໃຫ້ມີຄວາມໜັກແໜ້ນຂຶ້ນຕື່ມ, ເພີ່ມທະວີການຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍຢ່າງເອກະພາບ ແລະ ເຂັ້ມງວດ.

**(ນາງ ນາລີວັນ ແສງມະນີວົງ)**




# ຖືເປັນກຽດຂອງ ນັກຂ່າວອາວຸໂສ

# ທິດດີ




ຫາກເພື່ອນຕິດຕາມສື່ສະພາ ຄົງໄດ້ເຫັນຂ່າວໃນປີຜ່ານມາກ່ຽວກັບທ່ານປະທານສະພາແຫ່ງຊາດ ພົບປະໂອ້ລົມນັກຮົບສື່ມວນຊົນໃນໂອກາດວັນອອກໜັງສືພິມ “ຜູ້ແທນປະຊາຊົນ” ສະບັບທີ 1,000 ແລະ ວັນສ້າງຕັ້ງສື່ມວນຊົນສະພາແຫ່ງຊາດ ຄົບຮອບ 28 ປີ (12 ມິຖຸນາ 1996 ຫາ 12 ມິຖຸນາ 2024) ຄັ້ງວັນທີ 27 ທັນວາ 2024 ທີ່ສະພາແຫ່ງຊາດ.

ເນື້ອໃນສຳຄັນຂອງບົດໂອ້ລົມສື່ສະພາກໍຄືສື່ອື່ນໆຂອງສູນກາງ ທັງໜັງສືພິມ, ຂ່າວອອນລາຍ, ວິທະຍຸ, ໂທລະພາບ ຕ່າງກໍລາຍງານຢ່າງຄົບຖ້ວນແລ້ວ... ແຕ່ໃນຖານະສ່ວນຕົວທີ່ຢູ່ໃນອາຊີບສື່ມວນຊົນມາ 40 ປີ ຮູ້ສຶກເປັນກຽດ ແລະ ພາກພູມໃຈເປັນຢ່າງຍິ່ງທີ່ການຈັດຕັ້ງໄດ້ເຊື້ອເຊີນເຂົ້າຮ່ວມໃນການພົບປະດັ່ງກ່າວ.

ຫາກຫວນຄືນການລາຍງານຂ່າວກອງປະຊຸມສະພາແຫ່ງຊາດແລ້ວ ຜູ້ຂຽນຖືວ່າຕົນເອງເປັນຜູ້ທຳອິດທີ່ຂຽນຄຳລຳສຽງຈາກສະພາແຫ່ງຊາດລົງພິມໃນໜ້າໜັງສື ພິມປະຊາຊົນລາຍວັນ ແລະ ລາຍອາທິດ ເຊິ່ງເປັນກະບອກສຽງຂອງພັກປະຊາຊົນປະຕິວັດລາວຕັ້ງແຕ່ສະພາແຫ່ງຊາດຊຸດທີIII; ສະນັ້ນ, ໃນການພົບປະຈຶ່ງມີຂໍ້ສະເໜີວ່າ: ການປະສານງານດ້ານຂໍ້ມູນນັ້ນ ຄວນຈັດໃຫ້ມີກອງປະຊຸມແບບປຶກສາຫາລືລະ ຫວ່າງສື່ມວນຊົນ ແລະ ຄະນະຮັບຜິດຊອບເນື້ອໃນກອງປະຊຸມສາກ່ອນ ເພື່ອຄວາມເປັນເອກະພາບໃນການລາຍງານຂ່າວ... ເມື່ອເປັນເອກະພາບກັນແລ້ວ ເວລາດຳເນີນກອງປະຊຸມກໍລາຍງານຂ່າວໄດ້ຢ່າງວ່ອງໄວທັນການ ແລະ ຊັດເຈນໃນດ້ານຂໍ້ມູນ ເຊິ່ງຜູ້ຂຽນຄິດວ່າ ຫາກມີການກະກຽມຮອບຄອບແລ້ວ ຈະເຮັດໃຫ້ການລາຍງານຂ່າວກອງປະຊຸມມີຫຼາກຫຼາຍສີສັນ ໂດຍສະເພາະແມ່ນທັດສະນະຫຼັກໝັ້ນທາງການເມືອງທີ່ນັກຂ່າວຕ້ອງກຳແໜ້ນເວລາລາຍງານຂ່າວ ເພາະບໍ່ແມ່ນວ່າທຸກຄຳເຫັນຂອງສະມາຊິກສະພາແຫ່ງຊາດທີ່ນຳສະເໜີໃນກອງປະຊຸມ ຈະສາມາດຂຽນຂ່າວ ຫຼື ລາຍງານຂ່າວໄດ້ທັງໝົດ.

ສ່ວນບົດບາດທີ່ສື່ຕ້ອງໄດ້ຕັ້ງໜ້າບຸກທະລຸຕາມຄຳເຫັນໂອ້ລົມຂອງທ່ານປະທານສະພາແຫ່ງຊາດນັ້ນ, ສຳລັບຜູ້ຂຽນແລ້ວເຫັນວ່າມີຫຼາຍບັນຫາສຳຄັນ ເປັນຕົ້ນແມ່ນ:

- ການອະທິບາຍຕອບໂຕ້ການລາຍງານຂ່າວບໍ່ຊັດເຈນ ບິດເບືອນ ສື່ສັງຄົມອອນລາຍ.
- ການຂຽນບົດວິເຄາະສະຖານະການທີ່ເກີດຂຶ້ນໃນໂລກ.
- ການຕິດຕາມການຈັດຕັ້ງປະຕິບັດບັນດາຄາດໝາຍຕ່າງໆຂອງລັດຖະບານ ຕາມທີ່ມະຕິສະພາແຫ່ງຊາດໄດ້ວາງອອກ ແລະ ສຸດທ້າຍເປັນຫຍັງປະຊາຊົນຄົນລາວຈຶ່ງບໍລິໂພກຂ່າວຈາກປະເທດໃກ້ຄຽງສູງກວ່າຂ່າວຈາກສື່ມວນຊົນລາວ.

ນັ້ນແມ່ນບັນຫາທີ່ຜູ້ຂຽນສະຫຼຸບເປັນການສ່ວນຕົວ ທັງເປັນບັ້ງເລກໃຫ້ຕົນເອງ ແລະ ໝູ່ຄູ່ໃນວົງການສື່ມວນຊົນ ຕ້ອງໄດ້ບຸກທະລຸເຮັດຫຼ້ອນໃນປີ 2025 ນີ້ ຈະເປັນປີມ້ອນທ້າຍຂອງສະພາແຫ່ງຊາດຊຸດທີ IX ແລະ ກໍເປັນປີກະກຽມໃຫ້ແກ່ການເລືອກຕັ້ງສະພາແຫ່ງຊາດຊຸດທີ X, ບໍ່ທໍ່ນັ້ນໃນປີ 2025 ຍັງເປັນປີສຳຄັນ ເພາະລັດຖະທຳມະນູນສະບັບປັບປຸງກໍຈະໄດ້ຮັບຮອງ... ສະນັ້ນ, ການເຜີຍແຜ່ຮ່າງລັດຖະທຳມະນູນໃຫ້ກວ້າງຂວາງ ເລິກເຊິ່ງ ແລະ ທົ່ວເຖິງ ຄົງແມ່ນໜ້າທີ່ຂອງນັກຮົບສື່ມວນຊົນພວກເຮົາ.

ນັ້ນແມ່ນການພົບປະໂອ້ລົມຂອງການນຳຂັ້ນສູງຕໍ່ສື່ມວນຊົນ ແລະ ຖືເປັນກຽດອັນສູງສົ່ງຂອງນັກຮົບສື່ມວນຊົນທີ່ຈະຕ້ອງໄດ້ບຸກທະລຸເພື່ອສຳເລັດໜ້າທີ່ອັນມີກຽດສະຫງ່າດັ່ງກ່າວ.




# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

**ຄ. ການອົບຮົມວັດທະນະທຳ:** ກ່ຽວກັບພະນັກງານທີ່ຍັງອ່ອນຄວາມຮູ້ດ້ານວັດທະນະທຳນັ້ນ ການອົບຮົມດ້ານວັດທະນະທຳນີ້ເປັນສິ່ງສຳຄັນຍິ່ງ, ກ່ອນອື່ນຕ້ອງສອນໃຫ້ເຂົາເຈົ້າຮູ້ເລື່ອງປະຫວັດສາດພູມີສາດ, ຄິດເລກວິທະຍາສາດ, ທຳມະສາດວິທະຍາ ສັງຄົມວິທະຍາ, ການເມືອງ, ວິທີຂຽນໜັງສືພິມ ພາລະໜ້າທີ່ ແລະ ສິດຜົນປະໂຫຍດຂອງຊາວກຳມະກອນ, ຊາວໄຮ່ນາ. ບົດຮຽນແຕ່ລະບົດໃຫ້ແມ່ນຄະນະກຳມະການຮັບຜິດຊອບຄິດແຕ່ງຂຶ້ນ.

ຫ້ອງຮຽນນັ້ນໃຫ້ແມ່ນສຳນັກງານໜຶ່ງ ຫຼື ຫຼາຍສຳນັກງານລວມກັນຈັດຕັ້ງຂຶ້ນ. ຫ້ອງຮຽນເຫຼົ່ານັ້ນ ຈຳເປັນຕ້ອງມີນາຍຄູສອນຮັບຜິດຊອບຢູ່ເລື້ອຍໆ, ມີນາຍຄູສອນທາງນອກມາຊ່ວຍວຽກອີກ.

ພະນັກງານທັງຫຼາຍອາດຈະຜັດປ່ຽນກັນໄປຮຽນ.

ຕ້ອງຕ້ອນຮັບພວກນາຍຄູສອນຢ່າງເໝາະສົມ ແລະ ໃຫ້ລາງວັນສັນລະເສີນບັນດາຫ້ອງຮຽນທີ່ໄດ້ຮັບຜົນດີ. ບັນດາພະນັກງານທີ່ຮຽນຢູ່ໃນຫ້ອງຮຽນນັ້ນ ຕ້ອງຈັດເປັນຫ້ອງສຳລັບຜູ້ມີວັດທະນະທຳສູງ ແລະ ຕ່ຳຕ່າງກັນ, ບໍ່ຄວນຈັດເອົາຕາມຊັ້ນຕຳແໜ່ງສູງ ຫຼື ຕ່ຳຂອງພະນັກງານ.

ອ່ານຕໍ່ສະບັບໜ້າ...

# ສພຂ ອັດຕະປື ຄົ້ນຄວ້າເນື້ອໃນກອງປະຊຸມສະໄໝສາມັນ ແລະ ເກັບກຳຂໍ້ມູນການຄຸ້ມຄອງ, ນຳໃຊ້ແຮງງານ




(ສພຂ) - ວັນທີ 26 ທັນວາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປືໄດ້ມີກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ເພື່ອຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ອັດຕະປື ຊຸດທີ II ໂດຍການເປັນປະທານຮ່ວມຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ ແລະ ທ່ານ ທະນູໄຊ ບັນຊາລິດ ຮອງເຈົ້າແຂວງ ເຊິ່ງມີບັນດາທ່ານຄະນະປະຈຳພັກແຂວງ; ຄະນະປະຈຳ, ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ; ຕາງໜ້າບັນດາພະແນກການ, ອົງການຂອງແຂວງ; ສະມາຊິກສະພາປະຊາຊົນແຂວງ (ສສຂ) ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມ ພຽງ.

ຈຸດປະສົງແມ່ນເພື່ອປຶກສາຫາລື ແລະ ແລກປ່ຽນຄວາມຄິດຄວາມເຫັນເພື່ອກ້າວໄປເຖິງສ້າງຄວາມເປັນເອກະພາບກັນຕໍ່ບັນດາເນື້ອໃນ ແລະ ຂອບເຂດຄວາມຮັບຜິດຊອບຂອງອົງການປົກຄອງແຂວງ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຊຸດທີ II ທີ່ຈະຈັດຂຶ້ນໃນໄວໆນີ້; ເປັນເອກະພາບທາງດ້ານທັດສະນະຕໍ່ບັນຫາສຳຄັນຈຳນວນໜຶ່ງ ແລະ ພ້ອມກັນຕີລາຄາ, ຖອດຖອນບົດຮຽນ ກ່ຽວກັບກົນໄກການປະສານງານລະຫວ່າງ ສພຂ ກັບ ອົງການປົກຄອງແຂວງເພື່ອຮັບປະກັນໃຫ້ບັນດາເນື້ອໃນໄດ້ຮັບການຄົ້ນຄວ້າປະກອບຄວາມຄິດຄວາມເຫັນຈາກບັນດາທ່ານ ສສຂ ແລະ ສ້າງຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆໃຫ້ເລິກເຊິ່ງ.

ກອງປະຊຸມ ໄດ້ຮັບຟັງການຜ່ານແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II; ບົດລາຍງານຂອງພະແນກແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; ບົດລາຍງານຂອງພະແນກການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ແຜນຈັດສັນງົບປະມານແຫ່ງລັດໃຫ້ບັນດາພະແນກການ, ອົງການທຽບເທົ່າພະແນກຂັ້ນແຂວງ ໃນປີ 2025, ສະເໜີຂໍ້ດັດແກ້ງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024; ຄົ້ນຄວ້າຫົວຂໍ້ເພີ່ມຕື່ມທີ່ເປັນຫາເຄັ່ງຮ້ອນ ແລະ ພົ້ນເດັ່ນ ເພື່ອຈະນຳເຂົ້າຄົ້ນຄວ້າ ແລະ ພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8.

ວັນທີ 28 ທັນວາ, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານສະພາປະຊາຊົນແຂວງ, ທ່ານ ແຫວນຄຳ ປະທຸມມະແສງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍພະນັກງານຕິດຕາມ ໄດ້ເຄື່ອນໄຫວເກັບກຳຂໍ້ມູນການຄຸ້ມຄອງ ແລະ ນຳໃຊ້ແຮງງານ ຢູ່ບໍລິສັດ ຊິງຊິງ ພັດທະນາກະສິກຳ ບ້ານໜອງຫີນ ແລະ ບໍລິສັດ ຈຽນຕ່າ ກະສິກຳ ບ້ານໄຊດອນໂຂງ ເມືອງສະໜາມໄຊ.

ທັງນີ້, ກໍເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນແຂວງທີ່ຕິດພັນກັບການຄຸ້ມຄອງແຮງງານ ແລະ ການນຳໃຊ້ແຮງງານ ທັງເປັນການເກັບກຳຂໍ້ມູນພື້ນຖານດ້ານແຮງງານທີ່ຮັບໃຊ້ໃຫ້ແກ່ບໍລິສັດລົງທຶນທີ່ພັກ-ລັດອະນຸຍາດໃນຂອບເຂດທົ່ວປະເທດ ໂດຍສະເພາະແຂວງອັດຕະປືເປັນຕົ້ນແມ່ນດ້ານສະຖິຕິແຮງງານທັງພາຍໃນແຂວງແລະຕ່າງແຂວງ, ການສະໜອງແຮງງານໃຫ້ແກ່ບໍລິສັດ, ການນຳໃຊ້ແຮງງານ, ເກນອາຍຸແຮງງານ ແລະ ອື່ນໆ ເພື່ອເປັນຂໍ້ມູນສັງລວມລາຍງານຕໍ່ຄະນະປະຈຳສພຂ ແລະ ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງອັດຕະປື.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງການລາຍງານໂດຍຫຍໍ້ຈາກທັງສອງບໍລິສັດ ເຊິ່ງບໍລິສັດ ຊິງຊິງພັດທະນາກະສິກຳ ມີແຮງງານທັງພາຍໃນແຂວງ ແລະ ຕ່າງແຂວງ ສ່ວນໃຫຍ່ຈະເປັນແຮງງານພາຍໃນແຂວງ, ມີແຮງງານ 200 ກວ່າຄົນ, ເປັນແຮງງານລັກສະນະຮັບເໝົາ ແລະ ລາຍເດືອນ, ມີເງິນເດືອນຂັ້ນຕໍ່າ 4.5 ລ້ານກີບຕໍ່ຄົນ, ມີຄວາມເອົາໃຈໃສ່ຊຸກຍູ້ດ້ານນະໂຍບາຍໃຫ້ແກ່ແຮງງານໃນເທສະການງານບຸນປະເພນີ, ຊ່ວຍເຫຼືອດ້ານສຸຂະພາບຍາມເຈັບປ່ວຍ, ມີຄວາມສະຫງົບປອດໄພ ແລະ ບໍ່ມີປາກົດການຫຍໍ້ທໍ້; ບໍລິສັດຍັງໄດ້ສອນດ້ານເຕັກນິກ, ຂັ້ນຕອນ ແລະ ວິທີການຕ່າງໆໃຫ້ແກ່ແຮງງານເປັນຕົ້ນ: ການຮັກສາ, ການຕັດໃບກ້ວຍ, ການໃສ່ຝຸ່ນ, ໃສ່ນໍ້າ, ສຸມຖົງຫໍ່ກ້ວຍ. ນອກນີ້, ທາງບໍລິສັດມີແຜນໃນຕໍ່ໜ້າ ຈະສ້າງຫ້ອງຮຽນໃຫ້ກັບລູກຫຼານແຮງງານ ຈຶ່ງສະເໜີໃຫ້ສະໜອງຄູແລະອຸປະກອນການສິດສອນ (ປຶ້ມສອນ) ຊັ້ນ ມ1-ມ2. ສ່ວນບໍລິສັດ ຈຽນຕ່າ ກະສິກຳ ມີແຮງງານ 70 ກວ່າຄົນ, ເປັນແຮງງານລັກສະນະຮັບເໝົາ, ມີ 4 ພາກສະໜາມ, ສະໜາມໃດມີວຽກຫຼາຍ ແມ່ນຈະເຄື່ອນຍ້າຍແຮງງານໄປສະໜາມນັ້ນ ເຊິ່ງສ່ວນຫຼາຍເປັນແຮງງານຕ່າງແຂວງ ແລະ ຕ່າງປະເທດ.

ໃນຕອນທ້າຍ, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ໄດ້ສະແດງຄວາມຍ້ອງຊົມເຊີຍຕໍ່ສອງບໍລິສັດ ໃນການການສະໜອງຂໍ້ມູນຄັ້ງນີ້ ແລະ ການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນມີລາຍຮັບ, ການສ້າງສີມືໃຫ້ແກ່ແຮງງານ; ສະເໜີໃຫ້ບໍລິສັດເອົາໃຈໃສ່ກວດກາ ແລະ ເກັບກຳສະຖິຕິແຮງງານ ໃຫ້ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ, ປະກອບສ່ວນເຂົ້າໃນການພັດທະນາບ້ານທີ່ຢູ່ຂອບເຂດການລົງທຶນຂອງບໍລິສັດຢ່າງສົມເຫດສົມຜົນ ຕາມແນວທາງຂອງພັກ, ນະໂຍບາຍຂອງລັດ; ເພີ່ມທະວີການຄຸ້ມຄອງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ ໃຫ້ເຄື່ອນໄຫວບົນພື້ນຖານຫຼັກການ, ສັນຍາແຮງງານ, ຮັບປະກັນຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດໂດຍບໍ່ມີການຈຳແນກແລະ ບໍ່ອະນຸຍາດໃຫ້ນຳໃຊ້ແຮງງານດ້ວຍການບັງຄັບທຸກຮູບແບບ.

**(ວິນັດ ສີສຸລາດ)**

# ມອບລົດຖີບໃຫ້ 11 ໂຮງຮຽນຢູ່ເມືອງອະນຸວົງ




(ສພຂ)-ວັນທີ 30 ທັນວາ 2024 ທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນແຂວງໄຊສົມບູນ ໄດ້ເປັນປະທານພິທີມອບ-ຮັບລົດຖີບໃຫ້ນັກຮຽນທີ່ຮຽນເກັ່ງ ແລະ ນັກຮຽນທີ່ຄອບຄົວທຸກຍາກ 11 ໂຮງຮຽນ ພາຍໃນເມືອງອະນຸວົງ, ເຂົ້າຮ່ວມມີຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ອຳນວຍການໂຮງຮຽນ, ຄູ-ອາຈານ ຕະຫຼອດຮອດນ້ອງນັກຮຽນທີ່ໄດ້ຮັບລົດຖີບ.

ລົດຖີບຈຳນວນ 55 ຄັນ ທີ່ນຳມາມອບໃນຄັ້ງນີ້ມີມູນຄ່າ 80 ລ້ານກວ່າກີບ ໄດ້ຮັບການສະໜັບສະໜູນຈາກມູນນິທິຈີນເພື່ອພັດທະນາຊົນນະບົດ ຮ່ວມກັບກຸ່ມບໍລິສັດອາໂຕ ແລະ ມູນນິທິຈີ່ງຢວນຮາຍຢຸນ ເພື່ອນຳໄປມອບໃຫ້ໂຮງຮຽນລະ 5 ຄັນ ພ້ອມທັງແນະນຳການຊົມໃຊ້, ປົກປັກຮັກສາໃຫ້ເກີດປະໂຫຍດເພື່ອນຳໃຊ້ໃຫ້ຍາວນານທີ່ສຸດ; ທັງນີ້, ກໍເພື່ອສົ່ງເສີມພໍ່ແມ່ປະຊາຊົນ ໂດຍສະເພາະແມ່ນຄອບຄົວຜູ້ທີ່ມີຄວາມຫຍຸ້ງຍາກດ້ານເສດຖະກິດ, ຄອບຄົວທີ່ທຸກຍາກຕະຫຼອດຮອດຫຼານນ້ອຍນັກຮຽນຜູ້ທີ່ຮຽນດີຮຽນເກັ່ງ ເພື່ອໃຫ້ເຂົາເຈົ້າມີແຮງຈູງໃຈໃນການຄົ້ນຄວ້າຮ່ຳຮຽນ.

**(ແສງຕາວັນ ລັດຕະນະວົງ)**

## ສພຂ...

(ຕໍ່ຈາກໜ້າ 6)

ການເງິນ ແລະ ວຽກງານຈັດຕັ້ງກວດກາຂອງ ສພຂ; ໄດ້ປັບປຸງແບບແຜນວິທີເຮັດວຽກ, ວິທີນຳພາ ໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານແຕ່ລະໄລຍະ ແລະ ມີການໄກປະສານສົມທົບກັບຫ້ອງວ່າການແຂວງ, ພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ. ປະຕິບັດໜ້າທີ່ເປັນເສນາທິການກະກຽມກອງປະຊຸມຄະນະປະຈຳ ສພຂ 5 ຄັ້ງ, ກອງປະຊຸມທາບທາມຮ່າງກົດໝາຍ 13 ສະບັບ; ຄົ້ນຄວ້າ, ກະກຽມເນື້ອໃນໃຫ້ແກ່ ສສຊ, ສສຂ ລົງພົບປະປະຊາຊົນ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6-7 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງ ໄດ້ 103 ຈຸດ, ມີ 98 ບ້ານ, 2 ກົມກອງ, 3 ສຳນັກງານ, ມີຜູ້ເຂົ້າຮ່ວມຮັບຟັງ 8,688 ຄົນ ຍິງ 3,705 ຄົນ ແລະ ອື່ນໆ.

ກອງປະຊຸມຍັງໄດ້ຮັບຟັງການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ເຊິ່ງໄດ້ຍົກໃຫ້ເຫັນຜົນງານທີ່ພົ້ນເດັ່ນ ເປັນຕົ້ນຮັບຄຳຮ້ອງທຸກ 38 ເລື່ອງ ຄ້າງມາ 03 ເລື່ອງ ລວມເປັນ 41 ເລື່ອງ ໃນນີ້, ຄຳຮ້ອງຂໍຄວາມເປັນທຳ 25 ເລື່ອງ ຄຳສະເໜີ 16 ເລື່ອງ, ຄົ້ນຄວ້າສຳເລັດ 37 ເລື່ອງ, ສະເໜີຖອນ 01 ເລື່ອງ, ກຳລັງຄົ້ນຄວ້າ 04 ເລື່ອງ. ການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ເຊິ່ງມີຜົນສຳເລັດຫຼາຍດ້ານ ໂດຍສະເພາະແມ່ນໄດ້ຄົ້ນຄວ້າ ແລະ ອອກມະຕິຄະນະປະຈຳສະພາປະຊາຊົນແຂວງ 11 ສະບັບ. ການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໂດຍຍົກໃຫ້ເຫັນຜົນງານທີ່ຍາດມາໄດ້ ເປັນຕົ້ນ: ຕິດຕາມກວດກາເກັບກຳຂໍ້ມູນກ່ຽວກັບຄາດໝາຍພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກແລະວຽກແນວໂຮມ, ຊົນເຜົ່າ, ສາສະໜາ, ການປົກຄອງທ້ອງຖິ່ນ, ໂຄງການລົງທຶນ ແລະ ການພັດທະນາທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ; ການຈັດຕັ້ງປະຕິບັດກອງທຶນປະກັນສຸຂະພາບຢູ່ 7 ເມືອງ; ຕິດຕາມກວດກາການຈັດຕັ້ງປະຕິບັດຄາດໝາຍ ແລະ ການຈັດສັນນຳໃຊ້ງົບປະມານໂຄງການລົງທຶນຂອງລັດເຂົ້າໃນວຽກງານສຶກສາທິການແລະກິລາຢູ່ 7 ເມືອງ.

ໃນຕອນທ້າຍ, ທ່ານ ໃສຄຳ ທອງລັດ ໄດ້ເນັ້ນໜັກໃຫ້ແຕ່ລະພາກສ່ວນ ສຸມໃສ່ສຶກສາອົບຮົມວຽກງານແນວຄິດການເມືອງໃຫ້ສະມາຊິກພັກ-ພະນັກງານຢ່າງປົກກະຕິຕໍ່ເນື່ອງ; ປັບປຸງແບບແຜນວິທີເຮັດວຽກ, ປັບປຸງການບໍລິຫານວຽກງານໄປຕາມພາລະບົດບາດ, ກົດໝາຍ ແລະລະບຽບການຢ່າງເຂັ້ມງວດ; ເອົາໃຈໃສ່ປັບປຸງກົນໄກການປະສານສົມ ທົບກັບອົງການທີ່ກ່ຽວຂ້ອງ ເພື່ອຮັບປະກັນເຮັດໃຫ້ການເຄື່ອນໄຫວຂອງບັນດາຄະນະກຳມະການ ແລະ ຄະນະເລຂາທິການ ກໍຄືການລາຍງານສະໜອງຂໍ້ມູນຂ່າວສານຂອງອົງການກ່ຽວຂ້ອງ ລວມທັງການແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ມີຄວາມເປັນເອກະພາບ ແລະ ເປັນທີ່ສິ້ນສຸດຕາມກົດໝາຍ; ຈັດຕັ້ງຜັນຂະຫຍາຍແຜນການປີ 2025 ຂອງສະພາປະຊາຊົນແຂວງ, ບັນດາຄະນະກຳມະການ ແລະ ຄະນະເລຂາທິການ ເປັນແຜນງານອັນລະອຽດໃນແຕ່ລະໄລຍະແນໃສ່ເຮັດໃຫ້ທິດທາງ ແລະ ຄາດໝາຍລວມ ໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດຕາມແຜນການກຳນົດໄວ້.

**(ຂ່າວ: ນາງ ໂສລະຢ໋າ, ພາບ: ນາງ ມາລາວັນ)**

ອາດ ກະວີລາວ

# ສັງຂານຄົນ

**# ມະນີວອນ ພົມມະລົມ**

❊ ສັງຂານມີທ່ຽງໝັ້ນ
ເກີດມາດົນລາລັບ
ເຖິງຊິພຽນແພງໄວ້
ຍໍມືວອນວ່ອນເວົ້າ

ຈີລັງຢູ່ຄົງທົນ
ມິ່ງມໍລະນາມ້ຽນ
ເອົາເງິນຄຳໂຮມຫໍ່
ຂໍໄວ້ແມ່ນບໍ່ຟັງ ດອກນາ !

❊ ກຳເນີດມາຮ່ວມບ້ານ
ຍາມເຮົາມີເງິນງານ
ບາດວ່າໂລຄາຕ້ອງ
ເຖິງຊິລວຍໝື່ນລ້ານ

ຖານຖິ່ນໂລກາ
ຢ່າອວດໂອຫານໂກ້
ໝອງກາຍຍາມເຈັບປ່ວຍ
ເງິນນັ້ນບໍ່ພໍ ດອກນາ !

❊ ບາງຄົນແສນຊົ່ວຊ້າ
ຂອງເຂົາເປັນຂອງຕົນ
ສຸດທ້າຍເວນກຳໂຄ້ງ
ມອບຄວາມເຈັບແສບຊ້ຳ

ຫາໂລບລວງເອົາ
ກົ່ກຳກະທຳໄວ້
ຫວນຄືນສະໜອງຕອບ
ກຳກ້ຽວກ່ຽວໂຕ

❊ ຄົນຈອງຫອງເຫຼີ່ານີ້
ຢ່າຊູຫວັງລອຍນວນ
ຄັນບໍ່ມີໃຜຮູ້
ທັງຈິດຈຳຈື່ໄວ້

ມີພຽງຄຸກຄຸມຂັງ
ຢູ່ເໜືອກົດໝາຍໄດ້
ຍົມພິບານຍັງໝາຍຊື່
ກຽມໂຕໃຊ້ສ່ວນກຳ

❊ ຍາມຊີວັງມອດມ້ຽນ
ມີອັກຄີຜານເຜົາ
ທໍລະມານນອນດົ້ນ
ບໍ່ມີຫຼຸດລອດພົ້ນ

ວິນວຽນຢູ່ອະເວຈີ
ຮ່າງກາຍເກີນຮ້ອນ
ເພາະເວນກຳເຄີຍກໍ່
ພາຕົນຂຶ້ນສູ່ສະຫວັນ ດອກນາ !



## ສັກຫາຍ ລະບາຍ

**(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)**

**# ສຽມທ້ຽນ**

❊ ***ເປີດ***ສາກເດືອນມັງກອນກັບອາລະກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນຂັ້ນແຂວງ (ສພຂ) ໃນ***ທົ່ວປະເທດ ແລະ ຫຼາຍເຂດແຂວງກໍ່ປິດ***ລົງດ້ວຍຜົນສຳເລັດອັນຈົບງາມ ***(ຊົມເຊີຍ!)*** ຂໍຊື່ນຊົມກ່າວຍ້ອງ ນັກຂ່າວ ສພຂ ເປັນເຈົ້າການຂຽນບົດ ແລະ ຂ່າວຄາວຍັງເບື້ອງ ໜັງສືພິມຜູ້ແທນໃຫ້ ໂຄສະນາເຜີຍແຜ່ການເຄື່ອນໄຫວ ໃຫ້ສັງຄົມໄດ້ຮັບຮູ້ ຜົນງານອ້າງອອດໂຊວ໌ ***ຊອບແລ້ວ!***

❊ ***18 ມັງກອນ 2025*** ແມ່ນມື້ ໜັງສືພິມຜູ້ແທນປະຊາຊົນ ອອກສູ່ສາຍຕາມວນຊົນ ແຕ່ເໜືອຕະຫຼອດໃຕ້ ຊອບ ***13 ປີ***ຮັບໃຊ້ ຄຽງຄູ່ສອງສະພາ ບ່າເທດມາບັນຍາຍ ສູ່ສາຍຕາສັງຄົມກວ້າງ ທັງແລວຂວາງແລວຕັ້ງຂອງ ສສຊ ແລະ ສສຂ ຢ່າງສະຫງ່າ ຂຽນບົດຄວາມຂ່າວຈະແຈ້ງ ບໍ່ມີລ້ອນເລື່ອງວ່າ ***ທ່ານເອີຍ!*** ຂໍອວຍພອນແດ່ເຈົ້າ ນັກຂ່າວທັງຫຼາຍ ໃນອົງການລັດຂຽນ ທົ່ວສະພາເໜືອໃຕ້ ມິດສະຫາຍຄ່ຳພ້ອມ ເພື່ອນຮ່ວມງານທຸກກ້າຝ່າຍ ຈົ່ງສຸຂີລາບລົ້ນ ສົ່ງຜົນງານຢູ່ເລື້ອຍ ບໍ່ອາງເອັ້ນທ່າງຫາຍ ***ທ່ານເອີຍ!***

## ຊອບຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ມາຕຶກອີຫຼີ

**ເມຍ:** ມື້ນີ້ເຈົ້າຄືກັບເຮືອນໄວແທ້
**ຜົວ:** ຂ້ອຍມີເລື່ອງກັບເຈົ້ານາຍ
**ເມຍ:** ແລ້ວມັນເປັນແນວໃດ
**ຜົວ:** ຖືກເຈົ້ານາຍທັງດ່າທັງໄລ່
**ເມຍ:** ລາວ.... ໄລ່ອອກວຽກຫວະ?
**ຜົວ:** ບໍ່ ແຕ່ລາວໄລ່ໃຫ້ໄປລົງນະຮົກ, ແລ້ວຍັງຖາມອີກວ່າ ໄປຖືກບໍ່ !!!
**ເມຍ:** ແລ້ວແນວໃດຕໍ່
**ຜົວ:** ຂ້ອຍກະເລີຍຮີບ... ກັບມາເຮືອນນີ້ເດ
**ເມຍ:** ຈັ່ງແມ່ນຊາດມຶງບໍ້... ກູຊິດ່າຊ້ຳໃຫ້ມັນແລ້ວສາເຫັນບໍ່ ກູວ່າລະ ກູມາບໍ່ຜິດທີ່ອີຫຼີ
**ຜົວ:** ?????????



## ຄະຕິເຕືອນໃຈ

**#ດອກຫຍ້າ**

ຢ່າໄດ້ຕິຄະແຫຼງເອົ້າ
ບໍ່ແມ່ນເຊື້ອຊາດອ້ອຍ

ເອົາໜໍ່ເລົາມາປູກ
ກິນໄດ້ກະບໍ່ຫວານ

# ປະຊາກອນໂລກບັນລຸ 8.09 ຕື້ຄົນ ໃນວັນປີໃໝ່ນີ້

(Xinhua) - ຕາມການຄາດຄະເນຂອງສໍານັກງານການສໍາຫຼວດສໍາມະໂນພົນລະເມືອງຂອງສະຫະລັດອາເມລິກາ (United States Census Bureau - USCB) ທີ່ເຜີຍແຜ່ເມື່ອວັນຈັນທີ 30 ທັນວາຜ່ານມາ, ຄາດວ່າປະຊາກອນໂລກຈະເພີ່ມຂຶ້ນຫຼາຍກວ່າ 71 ລ້ານຄົນໃນປີ 2024 ແລະ ຈະບັນລຸ 8.09 ຕື້ຄົນໃນວັນປີໃໝ່.

ການເພີ່ມຂຶ້ນ 0.9 ສ່ວນຮ້ອຍໃນປີ 2024 ຖືວ່າຊ້າລົງເລັກໜ້ອຍຈາກປີ 2023 ເຊິ່ງປະຊາກອນໂລກເພີ່ມຂຶ້ນ 75 ລ້ານຄົນ; ອີງຕາມການຄາດຄະເນ, ໃນເດືອນມັງກອນ 2025 ປະຊາກອນທົ່ວໂລກຈະເກີດ 4.2 ຄົນ ແລະ ເສຍຊີວິດ 2 ຄົນຕໍ່ວິນາທີ.

USCB ເຜີຍວ່າ ປະຊາກອນສະຫະລັດ ເພີ່ມຂຶ້ນ 2.6 ລ້ານຄົນໃນປີ 2024 ແລະ ໃນວັນປີໃໝ່, ຈະຢູ່ທີ່ 341 ລ້ານຄົນ.



# NPC ປິດກອງປະຊຸມຄະນະປະຈໍາສະໄໝທີ 13




ທ່ານ ຈ້າວ ເລີ້ຈີ້ (ກາງ, ແຖວໜ້າ) ຖ່າຍຮູບຮ່ວມກັບບັນດາສະມາຊິກຄະນະກໍາມາທິການກົດໝາຍພື້ນຖານຂອງເຂດບໍລິຫານພິເສດມາເກົາ ສະໄໝທີ 6 ຫຼັງຈາກມອບຈົດໝາຍແຕ່ງຕັ້ງ, ທີ່ຫໍປະຊຸມໃຫຍ່ສະພາປະຊາຊົນ, ນະຄອນຫຼວງປັກກິ່ງ

(Xinhua) - ເມື່ອວັນພຸດທີ 25 ທັນວາຜ່ານມາ, ຄະນະປະຈໍາສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (National People's Congress - NPC) ຊຸດທີ XIV ໄດ້ປິດກອງປະຊຸມສະໄໝທີ 13 ພາຍຫຼັງທີ່ດໍາເນີນມາແຕ່ວັນທີ 21 ທັນວາ ໂດຍການເປັນປະທານຂອງທ່ານຈ້າວ ເລີ້ຈີ້ (Zhao Leji) ປະທານຄະນະປະຈໍາ NPC.

ໃນວັນປິດກອງປະຊຸມ, ບັນດາສະມາຊິກສະພາ ໄດ້ລົງຄະແນນສຽງຮັບຮອງເອົາກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍການເຜີຍແຜ່ວິທະຍາສາດ ແລະ ເຕັກໂນໂລຊີ (ປັບປຸງ) ແລະ ມະຕິວ່າດ້ວຍການປັບປຸງກົດໝາຍວ່າດ້ວຍການກວດກາ; ຕົກລົງປົດທ່ານຫວາງ ກວາງຮວາ (Wang Guanghua) ອອກຈາກຕໍາແໜ່ງລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ແຕ່ງຕັ້ງທ່ານ ກວນ ຈື້ໂອວ (Guan Zhi'ou) ໃຫ້ດໍາລົງຕໍາແໜ່ງດັ່ງກ່າວແທນ.

ທ່ານ ສີ ຈິ້ນຜິງ ໄດ້ລົງນາມໃນຄໍາສັ່ງຂອງປະທານປະເທດ 4 ສະບັບ ເພື່ອປະກາດໃຊ້ກົດໝາຍ ແລະ ການຕົກລົງບັນຫາສໍາຄັນຂ້າງເທິງ.

ກອງປະຊຸມໄດ້ມີມະຕິສະເໜີຮ່າງປັບປຸງກົດໝາຍວ່າດ້ວຍສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດ ແລະ ສະພາຜູ້ແທນປະຊາຊົນທ້ອງຖິ່ນທຸກຂັ້ນ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ NPC ຊຸດທີ XIV ເພື່ອພິຈາລະນາຢ່າງຮອບຄອບຕື່ມອີກ ແລະ ມອບໝາຍໃຫ້ທ່ານ ຫຼີ ຫົງຈົງ (Li Hong-zhong) ຮອງປະທານຄະນະປະຈໍາ NPC ຊີ້ແຈງຕໍ່ກອງປະຊຸມຮັບຊາບ.

ກອງປະຊຸມໄດ້ມີມະຕິຕົກລົງຈັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາຜູ້ແທນປະຊາຊົນທົ່ວປະເທດ ຊຸດທີ XIV ເຊິ່ງຈະໄຂຂຶ້ນໃນວັນທີ 05 ມີນາ 2025.

ບັນດາສະມາຊິກສະພາ ໄດ້ໃຫ້ສັດຕະຍາບັນສົນທິສັນຍາການສົ່ງຜູ້ຮ້າຍຂ້າມແດນລະຫວ່າງຈີນກັບຊິມບັບເວ ແລະ ສົນທິສັນຍາອີກສະບັບລະຫວ່າງຈີນກັບຊູຣິນາມ; ລົງຄະແນນສຽງຮັບຮອງເອົາບັນຊີລາຍຊື່ຂອງສະມາຊິກຄະນະກໍາມາທິການກົດໝາຍພື້ນຖານຂອງເຂດບໍລິຫານພິເສດມາເກົາ ສໍາລັບສະໄໝທີ 6 ຂອງຄະນະປະຈໍາ NPC. ນອກຈາກນັ້ນ, ຍັງໄດ້ຮັບຮອງເອົາບົດລາຍງານຄຸນສົມບັດຂອງຜູ້ແທນປະຊາຊົນ ແລະ ບັນດາຮ່າງກົດໝາຍທີ່ກ່ຽວຂ້ອງກັບບຸກຄະລາກອນ.

ໃນການກ່າວຄໍາເຫັນປິດກອງປະຊຸມ, ທ່ານຈ້າວ ໄດ້ຮຽກຮ້ອງໃຫ້ບັນດາສະມາຊິກສະພາຮັກສາແນວທາງການເມືອງທີ່ຖືກຕ້ອງໃນວຽກງານຂອງຕົນ, ປະຕິບັດໜ້າທີ່ຕາມກົດໝາຍ, ມີຄວາມຮັບຜິດຊອບແລະປັບປຸງຄຸນນະພາບວຽກງານຂອງສະພາຜູ້ແທນປະຊາຊົນທົ່ວປະເທດຢ່າງຕໍ່ເນື່ອງ; ຮຽກຮ້ອງໃຫ້ມີການກະກຽມ ແລະ ດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ NPC ຊຸດທີ XIV ທີ່ຈະມາເຖິງຢ່າງເປັນຮູບປະທໍາ, ມີປະສິດທິພາບ, ຮອບຄອບ ແລະ ລະອຽດຖີ່ຖ້ວນ.

ທ່ານຈ້າວຍັງຮຽກຮ້ອງໃຫ້ບັນດາສະມາຊິກສະພາ ກະກຽມຢ່າງລະອຽດຖີ່ຖ້ວນ ແລະ ຈັດຕັ້ງປະຕິບັດວຽກງານໃນປີ 2025 ໃຫ້ສອດຄ່ອງກັບໜ້າທີ່ພື້ນຕໍ່ຂອງຄະນະປະຈໍາ NPC ປະຈໍາປີ 2025 ລວມທັງແຜນວຽກດ້ານນິຕິບັນຍັດ, ການຕິດຕາມກວດກາ, ການເປັນຕົວແທນ ແລະ ການຕ່າງປະເທດ.

# ນິວຢອກ ມີກົດໝາຍລົງໂທດບໍລິສັດທີ່ປ່ອຍອາຍພິດເຮືອນແກ້ວ, ຄາລິຟໍເນຍ ປະກາດໃຊ້ກົດໝາຍເພື່ອຫຼຸດຜ່ອນວຽກບ້ານ

(Xinhua) - ເມື່ອວັນພຸດທີ 26 ທັນວາຜ່ານມາ, ທ່ານນາງ ເຄທີ ໂຮຊຸນ (Kathy Hochul) ເຈົ້າຄອງລັດນິວຢອກຂອງສະຫະລັດອາເມລິກາ ໄດ້ລົງນາມໃນຮ່າງກົດໝາຍທີ່ກໍານົດໃຫ້ບໍລິສັດທີ່ປ່ອຍມົນລະພິດຈາກເຊື້ອໄຟຟອດຊິນ (fossil fuel) ລາຍໃຫຍ່ ຕ້ອງຊ່ວຍຈ່າຍຄ່າສ້ອມແປງຄວາມເສຍຫາຍທີ່ເກີດຈາກສະພາບອາກາດທີ່ຮ້າຍແຮງເຊິ່ງເກີດຂຶ້ນເລື້ອຍໆເນື່ອງຈາກການປ່ອຍອາຍພິດເຮືອນແກ້ວ.

ກົດໝາຍສະບັບນີ້ເອີ້ນວ່າ ກົດໝາຍກອງທຶນລວມເພື່ອການປ່ຽນແປງຂອງດິນຟ້າອາກາດ (ClimateChangeSuperfund Act) ກໍານົດໃຫ້ບໍລິສັດທີ່ປ່ອຍກາກບອນໃນປະລິມານຫຼວງຫຼາຍລະຫວ່າງປີ 2000-2024 ຕ້ອງຈ່າຍເງິນປະມານ 3 ຕື້ໂດລາຕໍ່ປີ ເປັນເວລາ 25 ປີ.

ເຈົ້າຄອງນະຄອນນິວຢອກກ່າວວ່າ "ດ້ວຍປະລິມານຝົນທີ່ຕົກໜັກ, ຄື້ນຄວາມຮ້ອນ ແລະ ພາຍຸຊາຍຝັ່ງ ທີ່ທໍາລາຍສະຖິຕິເກືອບທຸກໆປີ; ຊາວນິວຢອກຕ້ອງແບກຮັບພາລະຫຼາຍຕື້ໂດລາໃນດ້ານສຸຂະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ ເນື່ອງຈາກມົນລະພິດທີ່ສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມຂອງພວກເຮົາມາໂດຍຕະຫຼອດ."

ກົດໝາຍດັ່ງກ່າວ ມີຮູບແບບຕາມກົດໝາຍກອງທຶນລວມສະບັບດັ້ງເດີມ ເຊິ່ງສ້າງຕັ້ງຂຶ້ນໃນປີ 1980 ແລະ ກໍານົດໃຫ້ບໍລິສັດຕ່າງໆ ຈ່າຍເງິນຄ່າທໍາຄວາມສະອາດສິ່ງເສດເຫຼືອທີ່ເປັນພິດຈາກເຫດການຕ່າງໆ ເຊັ່ນການຮົ່ວໄຫຼຂອງນໍ້າມັນ ແລະ ສານເຄມີ.

ລັດຄາລິຟໍເນຍ ກໍໄດ້ປະກາດໃຊ້ກົດໝາຍສະບັບໃໝ່ ເມື່ອວັນພຸດວັນທີ 1 ມັງກອນຜ່ານມາ ແນໃສ່ຫຼຸດຜ່ອນພາລະວຽກບ້ານຂອງນັກຮຽນໃນທົ່ວລັດ.

ກົດໝາຍວຽກບ້ານເພື່ອສຸຂະພາບ (Healthy Home-work Act) ເຊິ່ງເຈົ້າຄອງລັດ ທ່ານ ກາວິນ ນິວຊໍາ (Gavin Newsom) ໄດ້ລົງນາມເມື່ອເດືອນກັນຍາ 2024 ມີຜົນບັງຄັບໃຊ້ໃນວັນທໍາອິດຂອງປີ 2025 ໂດຍມີເປົ້າໝາຍພື້ນຕໍາເພື່ອສົ່ງເສີມການເຮັດວຽກບ້ານໂດຍອີງໃສ່ຫຼັກຖານເພື່ອສະໜັບສະໜູນການຮຽນຮູ້ ແລະ ສະຫວັດດີການຂອງນັກຮຽນ ລວມເຖິງຄວາມສອດຄ່ອງ ແລະ ຄວາມຊັດເຈນໃນການໃຫ້ວຽກບ້ານ.

ຮ່າງກົດໝາຍນີ້ ຖືກສະເໜີຄັ້ງທໍາອິດໂດຍທ່ານ ນາງ ປິລາຣ໌ ສະເຄຍໂວ (Pilar Schia-vo) ສະມາຊິກສະພາແຫ່ງລັດຄາລິຟໍເນຍ ເພື່ອແກ້ໄຂຄວາມກັງວົນກ່ຽວກັບຄວາມກົດດັນຂອງນັກຮຽນ, ຄວາມສະເໝີພາບດ້ານການສຶກສາ ແລະ ປະສິດທິຜົນໂດຍລວມຂອງວຽກບ້ານ ເຊິ່ງນັກຮຽນ ລວມທັງລູກສາວຂອງນາງ ທີ່ຢູ່ໃນຊັ້ນປະຖົມສຶກສາປີທີ 6 ມັກຈະຈົ່ມກ່ຽວກັບການເຮັດວຽກບ້ານຫຼາຍເກີນໄປ.

ຢ່າງໃດກໍຕາມ, ກົດໝາຍນີ້ບໍ່ໄດ້ໝາຍຄວາມວ່າລັດຈະຫ້າມວຽກບ້ານ; ແຕ່ກໍານົດໃຫ້ອົງການການສຶກສາທ້ອງຖິ່ນ (local educational agencies - LEAs) ພັດທະນາ, ນໍາມາໃຊ້ ແລະປັບປຸງນະໂຍບາຍວຽກບ້ານເປັນປະຈໍາສໍາລັບທຸກຊັ້ນຮຽນຕັ້ງແຕ່ຊັ້ນອະນຸບານໄລຍະຂ້າມຜ່ານ ໄປຈົນເຖິງຊັ້ນມັດທະຍົມສຶກສາປີທີ 12.

ເພື່ອຊ່ວຍໃນຂະບວນການນີ້, ພະແນກສຶກສາທິການຂອງລັດຄາລິຟໍເນຍ ຈະອອກຄໍາແນະນໍາສໍາລັບໂຮງຮຽນໃນແຕ່ລະເຂດ ພາຍໃນວັນທີ 1 ມັງກອນ 2026, ສະໜອງຊັບພະຍາກອນສູນກາງສໍາລັບ LEAs ເພື່ອພັດທະນານະໂຍບາຍວຽກບ້ານຂອງພວກເຂົາ.

ນັກການສຶກສາ ແລະ ພໍ່ແມ່ບາງຄົນ ມີຄວາມກັງວົນວ່າການຫຼຸດລົງຂອງຄວາມຕ້ອງການວຽກບ້ານ ອາດສົ່ງຜົນກະທົບຕໍ່ມາດຕະຖານທາງວິຊາການ; ຢ່າງໃດກໍຕາມ, ຜູ້ສະໜັບສະໜູນໂຕ້ແຍ້ງວ່າ ກົດໝາຍນີ້ບໍ່ໄດ້ຍົກເລີກວຽກບ້ານໂດຍສິ້ນເຊີງ, ແຕ່ເປັນການເຮັດໃຫ້ວຽກບ້ານມີຈຸດມຸ່ງໝາຍ ແລະ ສະໜັບສະໜູນສະຫວັດດີການຂອງນັກຮຽນຫຼາຍຂຶ້ນ.



# ຫວຽດນາມ ບັງຄັບໃຊ້ກົດໝາຍອິນເຕີເນັດສະບັບໃໝ່ ຕ້ອງຢັ້ງຢືນຕົວຕົນ-ຄວບຄຸມການຫຼິ້ນເກມ



(AFP) - ກົດໝາຍສະບັບຫຼ້າສຸດຂອງຫວຽດນາມ ເຊິ່ງມີຊື່ເອີ້ນວ່າ "ດຳລັດ 147" ມີຜົນບັງຄັບໃຊ້ຢ່າງເປັນທາງການຕັ້ງແຕ່ວັນທີ 25 ທັນວາ 2024 ເປັນຕົ້ນໄປ ໂດຍທຸກບໍລິສັດເຕັກໂນໂລຊີທີ່ໃຫ້ບໍລິການຢູ່ຫວຽດນາມ ບໍ່ວ່າຈະເປັນ Facebook, Instagram, X ແລະ TikTok ຕ້ອງມີລະບົບການຢັ້ງຢືນຕົວຕົນ ແລະເກັບຮັກສາຂໍ້ມູນຜູ້ໃຊ້ເຊິ່ງຕ້ອງພ້ອມທີ່ຈະມອບໃຫ້ແກ່ເຈົ້າໜ້າທີ່ທຸກຄັ້ງທີ່ມີການຮ້ອງຂໍຈາກອົງການຂອງລັດຖະບານ; ໃນຂະນະດຽວກັນ, ບໍລິສັດຜູ້ໃຫ້ບໍລິການ ຕ້ອງພ້ອມທີ່ຈະລຶບເນື້ອຫາທີ່ລັດຖະບານຖືວ່າ "ຜິດກົດໝາຍ" ພາຍໃນ 24 ຊົ່ວໂມງ ຫຼັງຈາກໄດ້ຮັບການຮ້ອງຂໍຈາກລັດຖະບານ.

ນອກຈາກນັ້ນ, ທຸກເວັບໄຊສື່ສັງຄົມ ມີເວລາ 90 ວັນ ເພື່ອສະໜອງຂໍ້ມູນກ່ຽວກັບ "ຈຳນວນທັງໝົດຂອງການຢ້ຽມຊົມປົກກະຕິຈາກຫວຽດນາມ"ແລະ "ຈຳນວນຜູ້ໃຊ້ປົກກະຕິຕໍ່ເດືອນໃຫ້ແກ່ເຈົ້າໜ້າທີ່"; ກົດໝາຍຍັງລະບຸວ່າ ບັນຊີຜູ້ໃຊ້ທີ່ໄດ້ຮັບການຢັ້ງຢືນຕົວຕົນ ເຊິ່ງສ່ວນຫຼາຍແມ່ນ "ເຄື່ອງໝາຍຖືກໃສ່ພື້ນສີຟ້າ" ຈາກຜູ້ເບິ່ງແຍງລະບົບເທົ່ານັ້ນ, ຈຶ່ງຈະສາມາດອອກອາກາດ ຫຼື ຖ່າຍທອດສົດໄດ້.

ນອກຈາກເລື່ອງການໃຫ້ບໍລິການ ແລະ ການເກັບຮັກສາຂໍ້ມູນ, ດຳລັດ 147 ຍັງລະບຸກ່ຽວກັບການຈຳກັດໄລຍະເວລາການຫຼິ້ນເກມອອນລາຍຂອງຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ "ເພື່ອປ້ອງກັນການເສບຕິດ" ໂດຍກຳນົດເວລາ "ບໍ່ເກີນ 180 ນາທີຕໍ່ວັນ" ສຳລັບການຫຼິ້ນເກມທຸກປະເພດລວມກັນ.

ດຳລັດ147ຂອງຫວຽດນາມ ແມ່ນການຜັນຂະຫຍາຍຈາກກົດໝາຍວ່າດ້ວຍຄວາມປອດໄພທາງອິນເຕີເນັດ ສະບັບປີ 2018 ທີ່ບັນດາປະເທດຕາເວັນຕົກໄດ້ຕຳນິຕິຕຽນຢ່າງໜັກໜ່ວງ ວ່າເປັນຄວາມຕັ້ງໃຈຂອງອຳນາດການປົກຄອງຫວຽດນາມໃນການຈຳກັດສິດ ແລະ ເສລີພາບການນຳໃຊ້ອິນເຕີເນັດຂອງປະຊາຊົນ

ຂໍ້ມູນເບື້ອງຕົ້ນຂອງກະຊວງຂ່າວສານຫວຽດນາມ ສະແດງໃຫ້ເຫັນວ່າ, ປັດຈຸບັນ ໃນປະເທດມີຜູ້ໃຊ້ Facebook ປະມານ 65 ລ້ານຄົນ, YouTube 60 ລ້ານຄົນ ແລະ TikTok 25 ລ້ານຄົນ.

# ປະທານາທິບໍດີ Joe Biden ລົງນາມໃນກົດໝາຍ ໃຫ້ "ນົກອິນຊີຫົວຂາວ" ເປັນນົກປະຈຳຊາດ ແລະ ປະກາດໃຊ້ກົດໝາຍຕໍ່ຕ້ານການຮັບນ້ອງໃໝ່




(Xinhua) - ນົກອິນຊີຫົວຂາວ ຫຼື ນົກອິນຊີຫົວລ້ານ (bald eagle) ເຊິ່ງເປັນສັນຍະລັກຂອງອຳນາດ ແລະ ຄວາມເຂັ້ມແຂງຂອງສະຫະລັດອາເມລິກາ ມາເປັນເວລາກວ່າ 240 ປີ ໄດ້ຮັບກຽດອັນສົມຄວນເມື່ອວັນອັງຄານທີ 24 ທັນວາຜ່ານມາ, ມັນໄດ້ກາຍເປັນນົກປະຈຳຊາດຂອງປະເທດຢ່າງເປັນທາງການ.

ທ່ານປະທານາທິບໍດີ ໂຈ ໄບເດນ ແຫ່ງ ສ.ອາເມລິກາ ໄດ້ລົງນາມໃນກົດໝາຍທີ່ສົ່ງໃຫ້ໂດຍລັດຖະສະພາ ທີ່ປັບປຸງປະມວນກົດໝາຍສະຫະລັດ ເພື່ອແກ້ໄຂບາງສິ່ງທີ່ຄົນຈຳນວນຫຼາຍໄດ້ເບິ່ງຂ້າມເປັນເວລາດົນນານ ແລະ ກຳນົດໃຫ້ນົກອິນຊີຫົວຂາວທີ່ຫຼາຍຄົນຄຸ້ນເຄີຍ ເພາະຫົວສີຂາວ, ປາກສີເຫຼືອງ ແລະ ໂຕສີນ້ຳຕານ ເປັນນົກປະຈຳຊາດ, ອີງຕາມການລາຍງານຂອງສຳນັກຂ່າວ AP.

ນົກອິນຊີຫົວຂາວປາກົດຢູ່ເທິງຕາປະທັບຂອງສະຫະລັດ ເຊິ່ງຖືກນຳໃຊ້ໃນເອກະສານທາງການຕັ້ງແຕ່ປີ 1782 ເປັນປີທີ່ມີການອອກແບບຕາປະທັບດັ່ງກ່າວສຳເລັດ; ຕາປະທັບ ປະກອບດ້ວຍນົກອິນຊີ,ກິ່ງງ່າໝາກກອກ, ລູກສອນ, ໂລ່ປ້ອງກັນຄ້າຍຮູບທຸງຊາດ, ຄຳຂວັນ"EPluribus Unum" ແລະ ກຸ່ມດາວ.

ໃນປີດຽວກັນນັ້ນ ລັດຖະສະພາໄດ້ກຳນົດໃຫ້ນົກອິນຊີຫົວຂາວເປັນສັນຍະລັກແຫ່ງຊາດ ແລະ ຮູບພາບຂອງມັນປາກົດຢູ່ໃນຫຼາຍໆບ່ອນ, ຕັ້ງແຕ່ເອກະສານ ແລະ ທຸງປະທານາທິບໍດີ ໄປຈົນເຖິງເຄື່ອງໝາຍການທະຫານ ແລະ ສະກຸນເງິນສະຫະລັດ, ອີງຕາມ USA.gov.

ວັນດຽວກັນ, ປະທານາທິບໍດີ ໂຈ ໄບເດນ ໄດ້ປະກາດໃຊ້ກົດໝາຍຕໍ່ຕ້ານການຮັບນ້ອງໃໝ່ສະບັບທຳອິດຂອງລັດຖະບານກາງ ເຊິ່ງຖືເປັນການສິ້ນສຸດຄວາມພະຍາຍາມຫຼາຍປີທີ່ຄອບຄົວຂອງຜູ້ເຄາະຮ້າຍ ຮຽກຮ້ອງຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃນວິທະຍາເຂດຂອງວິທະຍາໄລ.

ກົດໝາຍຢຸດການຮັບນ້ອງໃໝ່ໃນວິທະຍາເຂດ (Stop Campus Hazing) ທີ່ຜ່ານສະພາຕ່ຳ ເມື່ອເດືອນກັນຍາ ແລະ ສະພາສູງ ໃນເດືອນທັນວາແລະ ໄດ້ລົງນາມໂດຍທ່ານ ໄບເດນ ເມື່ອວັນທີ 24 ທັນວາ, ກຳນົດໃຫ້ມະຫາວິທະຍາໄລຕ່າງໆ ເລີ່ມຕົ້ນເກັບກຳສະຖິຕິການຮັບນ້ອງໃໝ່ ເພື່ອປະກອບເຂົ້າໃນບົດລາຍງານສາທາລະນະທົ່ວໄປ.

ພາຍໃຕ້ກົດໝາຍຂອງລັດຖະບານກາງທີ່ມີຜົນບັງຄັບໃຊ້ມາຍາວນານ, ບັນດາວິທະຍາໄລແລະ ມະຫາວິທະຍາໄລຕ້ອງເປີດເຜີຍອາຊະຍາກຳທີ່ເກີດຂຶ້ນຢູ່ວິທະຍາເຂດຂອງຕົນໃນແຕ່ລະປີ; ເຖິງແມ່ນວ່າການຮັບນ້ອງໃໝ່ ຈະມີຄວາມຮຸນແຮງ ແລະ ເປັນອັນຕະລາຍເຖິງຊີວິດໃນບາງຄັ້ງ, ແຕ່ລັດຖະບານກາງບໍ່ເຄີຍກຳນົດໃຫ້ໂຮງຮຽນເປີດເຜີຍສະຖິຕິກ່ຽວກັບຄວາມຖີ່ຂອງການເກີດອາຊະຍາກຳດັ່ງກ່າວ ໂດຍສະເພາະພາຍໃນສະມາຄົມນັກສຶກສາຊາຍ (fraternities) ແລະ ສະມາຄົມນັກສຶກສາຍິງ(sororities) ທີ່ມີເປົ້າໝາຍເປັນສະມາຊິກໃໝ່ຂອງພວກເຂົາ.




ໃນຂະນະທີ່ເກືອບທຸກລັດຂອງສະຫະລັດຈະມີກົດໝາຍຕໍ່ຕ້ານການຮັບນ້ອງໃໝ່, ແຕ່ມາດຕະການຕ່າງໆກໍມີຂອບເຂດ ແລະ ຜົນກະທົບທີ່ແຕກຕ່າງກັນ; ຄວາມພະຍາຍາມທີ່ຜ່ານມາໃນການນຳກົດໝາຍຂອງລັດຖະບານກາງມາບັງຄັບໃຊ້, ຈຶ່ງລົ້ມເຫຼວໃນລັດຖະສະພາ.

# ຈີນ ເລີ່ມເພີ່ມອາຍຸບຳນານເທື່ອລະໜ້ອຍ ເພື່ອແກ້ໄຂບັນຫາປະຊາກອນອາຍຸສູງ




(Xinhua) - ມະຕິຂອງຈີນ ທີ່ຈະເພີ່ມອາຍຸບຳນານຕາມກົດໝາຍເທື່ອລະໜ້ອຍ ໄດ້ມີຜົນບັງຄັບໃຊ້ເມື່ອວັນພຸດທີ 1 ມັງກອນຜ່ານມາ ເຊິ່ງເປັນການປັບປ່ຽນຄັ້ງທຳອິດໃນຮອບ 70 ກວ່າປີ, ຂະນະທີ່ປະເທດພວມດຳເນີນການແກ້ໄຂບັນຫາປະຊາກອນອາຍຸສູງຢ່າງຈິງຈັງ.

ສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໄດ້ລົງຄະແນນສຽງເຫັນດີຕໍ່ມະຕິດັ່ງກ່າວເມື່ອເດືອນກັນຍາ 2024 ໂດຍອາຍຸບຳນານຕາມກົດໝາຍຂອງຜູ້ຊາຍ ຈະຄ່ອຍໆເພີ່ມຂຶ້ນຈາກ 60 ເປັນ 63 ປີ ໃນໄລຍະ 15 ປີເລີ່ມແຕ່ວັນທີ 1 ມັງກອນ 2025, ສ່ວນອາຍຸບຳນານຂອງແມ່ຍິງແລະແຮງງານຍິງຈະເພີ່ມຂຶ້ນຈາກ 55 ເປັນ 58 ປີ ແລະ ຈາກ50ເປັນ55ປີຕາມລຳດັບ.

ນັບແຕ່ປີ 2030 ເປັນຕົ້ນໄປ, ຈຳນວນປີຂັ້ນຕ່ຳຂອງການຈ່າຍເງິນສົມທົບກອງທຶນເບ້ຍບຳນານຂັ້ນພື້ນຖານ ເພື່ອຮັບເງິນຊ່ວຍເຫຼືອປະຈຳເດືອນ ຈະເພີ່ມຂຶ້ນເທື່ອລະໜ້ອຍ ຈາກ 15 ເປັນ 20 ປີ ໂດຍເພີ່ມຂຶ້ນ 6 ເດືອນຕໍ່ປີ; ຂະນະດຽວກັນ, ແຮງງານຈະໄດ້ຮັບການອະນຸຍາດໃຫ້ຮັບບຳນານໂດຍສະໝັກໃຈກ່ອນກຳນົດບໍ່ເກີນ 3 ປີລ່ວງໜ້າ ຫຼັງຈາກຈ່າຍເງິນສົມທົບກອງທຶນເບ້ຍບຳນານຄົບຈຳນວນປີຂັ້ນຕ່ຳ.

ນອກຈາກນັ້ນ, ນະໂຍບາຍໃໝ່ຍັງຈະອະນຸຍາດໃຫ້ບຸກຄົນເລື່ອນການຮັບບຳນານອອກໄປອີກ ຖ້າສາມາດບັນລຸຂໍ້ຕົກລົງກັບນາຍຈ້າງ, ແຕ່ການເລື່ອນເວລາບໍ່ຄວນເກີນ 3 ປີ.

ເບື້ອງຫຼັງການປະຕິຮູບແມ່ນການປ່ຽນແປງທີ່ສຳຄັນ 4 ຢ່າງຂອງໂຄງປະກອບປະຊາກອນຂອງຈີນຄື: ອາຍຸຍືນທີ່ເພີ່ມຂຶ້ນ, ຈຳນວນປີການສຶກສາທີ່ຫຼາຍຂຶ້ນ, ຜູ້ອາຍຸສູງທີ່ເພີ່ມຂຶ້ນ ແລະ ຈຳນວນປະຊາກອນໃນໄວເຮັດວຽກທີ່ຫຼຸດລົງ.

ຂໍ້ມູນຫຼ້າສຸດສະແດງໃຫ້ເຫັນວ່າ ອາຍຸສະເລ່ຍຂອງປະຊາກອນຈີນ ແມ່ນ 78.6 ປີ; ຂໍ້ມູນຢ່າງເປັນທາງການຍັງສະແດງໃຫ້ເຫັນວ່າ ຈີນ ໄດ້ເຂົ້າສູ່ສັງຄົມຜູ້ອາຍຸສູງລະດັບປານກາງແລ້ວ, ໃນທ້າຍປີ 2023 ຈຳນວນປະຊາກອນທີ່ມີອາຍຸ 60 ປີຂຶ້ນໄປ ມີ297ລ້ານຄົນກວມ21.1% ຂອງປະຊາກອນທັງໝົດ.

ອີງຕາມການຄາດຄະເນ ຈຳນວນຜູ້ທີ່ມີອາຍຸ 60 ປີຂຶ້ນໄປ ໃນຈີນ ຈະຫຼາຍກວ່າ 400 ລ້ານຄົນ ໃນຮອບປີ 2035, ກວມ 30% ຂອງປະຊາກອນທັງໝົດ.

ເຝົ້າໄວ້ ໄດ້ຂີດຂຽນ

# ເລື່ອງທີ່ໜ້າສົນໃຈ ຈາກປະເທດຕວັກກີ

❖ ວິເສດ ສະແຫວງສຶກສາ

ກະແສໃຫຍ່ໄຟແຮງໃນສະໜາມຮົບປົກປ້ອງສິດທິ ແລະ ຜົນປະໂຫຍດຂອງຄົນໃນໄວເດັກຍຸກນີ້ ກໍແມ່ນມາດຕະການຄວບຄຸມການນຳໃຊ້ສື່ສັງຄົມອອນລາຍໃນກຸ່ມເດັກນ້ອຍ ດັ່ງມີຂ່າວຈາກທາງການຂອງປະເທດຕວັກກີທີ່ວ່າ ການຊົມໃຊ້ເຕັກໂນໂລຊີດີຈີຕອນພາຍໃນປະເທດໄດ້ເພີ່ມຂຶ້ນຢ່າງໄວວາ ແລະ ຕໍ່ເນື່ອງໃນກຸ່ມເດັກນ້ອຍ ແລະ ຄົນໃນໄວໜຸ່ມ ອັນໄດ້ສ້າງບັນຫາທາງຈິດໃຈເຊັ່ນ ເຮັດໃຫ້ມີອາການຢ້ານກົວ, ຕົກໃຈງ່າຍ, ຊຶມເສົ້າ, ອາການໂສສຸດໂສສ້ຽງ ແລະ ອື່ນໆ. ທ່ານ ເດນິດ ກູເລີ ຮອງປະທານສະພາສູງສຸດ ຝ່າຍກິດຈະການວິທະຍຸ ແລະ ໂທລະພາບແຫ່ງຊາດຕວັກກີ ໄດ້ກ່າວກ່ຽວກັບບັນຫານີ້ວ່າ ການເສບຕິດອຸປະກອນດີຈີຕອນຫຼາຍເກີນເຖືອດໂດຍສະເພາະແມ່ນສື່ອອນລາຍນັ້ນ ໄດ້ກໍ່ໃຫ້ເກີດອາການ “ຢ້ານຕົກກະແສ” ໃນກຸ່ມເດັກນ້ອຍ. ຄວາມຢ້ານດັ່ງກ່າວ ພາໃຫ້ເກີດແນວຄິດໂສສຸດ, ຜິດຫວັງ, ລົບກວນເວລານອນ (ນອນບໍ່ຫຼັບ) ຍ້ອນຄວາມວິຕົກກັງວົນ ແລ້ວຕໍ່ໃສ່ແນວຄິດດ້ອຍຄ່າຕົນເອງ. ຍ້ອນແນວນີ້ລະ ທາງການຂອງຕວັກກີ ຈຶ່ງໄດ້ຄົ້ນຄວ້າລະບຽບການເພື່ອຄວບຄຸມລະບົບສື່ສັງຄົມໃນກຸ່ມຄົນອາຍຸຕ່ຳກວ່າ 16 ປີ. ສ່ວນທ່ານ ຮາເດຍເຊເຊີ ປະທານອະນຸກຳມະການສິດທິຂອງເດັກໃນລັດຖະສະພານັ້ນ ໄດ້ເວົ້າເຖິງອາການຂອງເດັກທີ່ຕົກເປັນທາດຂອງສື່ສັງຄົມອອນລາຍວ່າ: ເດັກຈະມີຄວາມສາມາດສື່ສານຊ້າ, ຄວາມສາມາດໃນການຕອບສະໜອງທາງອາລົມຫຼຸດລົງແລະຕ້ອງການແຍກປ່ຽວຕົນອອກຈາກສັງຄົມ.

ໃນປີ 2023, ອົງການກອງທຶນຂອງສະຫະປະຊາຊາດເພື່ອບັນຫາປະຊາກອນ ໄດ້ເຮັດການສຳຫຼວດກ່ຽວກັບເຍົາວະຊົນໃນຕວັກກີ ແລະ ໄດ້ພົບວ່າ ໃນ 67 ແຂວງ ຈາກທັງໝົດ 81 ແຂວງນັ້ນ ຄົນໃນເກນອາຍຸແຕ່ 15-24 ປີ ຈຳນວນ 92% ໃຊ້ສື່ສັງ ຄົມອອນລາຍ ແລະ ອີກຂ່າວໜຶ່ງຈາກຕວັກກີເຊັ່ນກັນນັ້ນ ກໍຄືນະໂຍບາຍເພີ່ມເງິນເດືອນຂັ້ນຕ່ຳ 30% ສຳລັບປີ 2025 ຄິດເປັນຈຳນວນເງິນ 22,104 ລີຣາ (ຊື່ສະກຸນເງິນຕວັກກີ). ໃນປີ 2024 ເງິນເດືອນຂັ້ນຕ່ຳແມ່ນ 17,002 ລີຣາ. ຂ່າວນີ້ອ່າວແປກ ເພາະວ່າໃນຫຼາຍໆປະເທດນັ້ນ ການປັບຂຶ້ນຄ່າແຮງງານ ຫຼື ເງິນເດືອນຂັ້ນຕ່ຳ ມັກຈະມີຂຶ້ນໃນສະພາບເງິນເຟີ້, ແຕ່ຢູ່ຕວັກກີນີ້ຜັດປີ້ນກັນ ເພາະວ່າໃນປີ 2024 ຜ່ານມາ ລະດັບເງິນເຟີ້ໃນປະເທດນີ້ໄດ້ຫຼຸດລົງເຖິງ 47.09% ເຊິ່ງນັບວ່າຢູ່ໃນລະດັບຕ່ຳສຸດນັບແຕ່ເດືອນມີນາປີ 2023. ທ່ານ ເວດາດ ອິຊິຄານ ລັດຖະມົນຕີກະຊວງແຮງງານ ແລະ ປະກັນສັງຄົມຂອງຕວັກກີ ມີຄຳເຫັນກ່ຽວກັບການເພີ່ມເງິນເດືອນຂັ້ນຕ່ຳສຸດຄັ້ງນີ້ວ່າ ເພື່ອຍົກລະດັບຊີວິດການເປັນຢູ່ຂອງຜູ້ອອກແຮງງານ, ຮັບປະກັນສະຖຽນລະພາບດ້ານເສດຖະກິດຂອງປະເທດ, ສ້າງຫຼັກຄ້ຳປະກັນຄວາມຍຸຕິທຳໃນຊີວິດ ແລະ ການງານ ເພື່ອໃຫ້ທຸກຄົນມີຄວາມໝັ້ນໃຈໃນແນວທາງການພັດທະນາປະເທດຊາດ.

ໃນຍຸກເຂົ້າຍາກ-ໝາກແພງຄືຊູ່ມື້ນີ້ ອັນເນື່ອງມາຈາກຄວາມຫຍຸ້ງຍາກທາງເສດຖະກິດຂອງໂລກ ແລະ ຂອງປະເທດ ໂດຍສະເພາະທາງການຂອງຫຼາຍໆປະເທດໄດ້ປັບຂຶ້ນເງິນເດືອນຂັ້ນຕ່ຳ, ເງິນສະຫວັດດີການສັງຄົມ ກໍຄືເງິນສະໜັບສະໜູນໃນຮູບແບບຕ່າງໆ ໃນນັ້ນລວມທັງຢູ່ປະເທດລາວຂອງພວກເຮົານຳ.







# ແມງກະສາບຫູໜວກ

*#ບ່າວກະບື*

ສາດສະດາຈານດຣ.ແຈ່ມແຈ້ງເຮັດການຄົ້ນຄວ້າກ່ຽວກັບຫົວຂໍ້ໜຶ່ງບໍ່ມີໃຜເຄີຍຄົ້ນຄວ້າມາກ່ອນ. ຢູ່ມາມື້ໜຶ່ງ, ເຂົາເຫັນແມງກະສາບໄຕ່ຢູ່ເທິງໂຕະຕໍ່ໜ້າເຂົາ. ເຂົາຕັດສິນໃຈລົງມືຄົ້ນຄວ້າກ່ຽວກັບແມງກະສາບຢ່າງຮີບດ່ວນ.

ເຂົາຈັບເອົາແມງກະສາບໄປບົງໄວ້ກາງໂຕະ ແລ້ວອອກຄຳສັ່ງວ່າ: “ແລ່ນ!” ແມງກະສາບໂຕນັ້ນແລ່ນ.

ຕໍ່ມາທ່ານເດັດຂາແມງກະສາບອອກຂາໜຶ່ງ, ເອົາມັນບົງໄວ້ກາງໂຕະແລະສັ່ງໃຫ້ມັນແລ່ນ ແມງກະສາບກໍແລ່ນ. ເຂົາເດັດຂາແມງກະສາບອອກຕື່ມອີກຂາໜຶ່ງ, ເອົາມັນບົງໄວ້ກາງໂຕະແລະບອກມັນວ່າ “ແລ່ນ!”, ເຖິງວ່າຈະຍາກແດ່, ແຕ່ມັນກໍແລ່ນ. ທ່ານສາດສະດາຈານເດັດຂາແມງກະສາບທັງໝົດອອກ, ເອົາມັນບົງໄວ້ກາງໂຕະ ແລ້ວບອກໃຫ້ມັນແລ່ນ, ແຕ່ຄັ້ງນີ້ມັນບໍ່ຍອມແລ່ນ.

ທ່ານສາດສະດາຈານ ດຣ.ແຈ່ມແຈ້ງ ພໍໃຈຕໍ່ຜົນການທົດລອງນີ້. ເຂົາສະຫຼຸບຄຳເຫັນວ່າ: “ເມື່ອເດັດຂາແມງກະສາບອອກໝົດ... ມັນຈະບໍ່ສາມາດໄດ້ຍິນສຽງຫຍັງໝົດ”.

# Deaf Cockroach

***#BAOKBU***

Prof. Dr ChaemCheng was in research of a subject on which no which no research had ever been done. One day, he saw a cockroach on the table in front of him. He immediately decided to under-take research on the roach.

He picked the roach and put it in the center of the table and said: “Run !” the roach ran.

He pulled off one leg of the insect, put it again in the center of the table and said, “Run!” the roach ran. He pulled one more leg off the roach, put it back on the table and said: “Run !” the roach could not !

Prof. Dr. ChaemCheng was satisfied with his research and concluded: “When you pull out all the legs of a roach, it can not hear anymore.”






ສ້າງເຮືອນ ສ້າງຄວາມອຸ່ນອາຍ ຢາຍເຕັມທົ່ວທາງ

● ໂດຍ : ພູຜາ

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພານວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລົມ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ອາລົນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ